*Journal of Science and Teacher Education (JLSTE), 2*(1), 78-89
**P-ISSN**: 3078-5405; **E-ISSN**: 3080-2628

# ປະສິດທິພາບການສອນເດັກຫ້ອງກຽມປະຖົມ ແລະ ຄວາມສາມາດອ່ານພະຍັນຊະນະປະກອບຮູບພາບ ຜ່ານກິດຈະກຳວົງມົນ ຢູ່ໂຮງຮຽນປະຖົມສົມບູນຂົວທີ 1, ແຂວງ ຫຼວງພະບາງ

*ນາງ ຈາຍພອນ ແສນບຸນເຊືອນ**

*ພາກວິຊາສ້າງຄູການສຶກສາກ່ອນໄວຮຽນ, ວິທະຍາໄລຄູຫຼວງພະບາງ*

## ບົດຄັດຫຍໍ້

ການຄົ້ນຄວ້ານີ້ມີຈຸດປະສົງເພື່ອສຶກສາປະສິດທິພາບຂອງບົດສອນກ່ຽວກັບການອ່ານພະຍັນຊະນະປະກອບຮູບພາບຕາມເກນ 80/80; ສຶກສາປະສິດທິຜົນຂອງການຮຽນຮູ້ ແລະ ເພື່ອສຶກສາຄວາມສາມາດດ້ານການອອກສຽງກ່ຽວກັບການອ່ານພະຍັນຊະນະປະກອບຮູບພາບຂອງເດັກຫ້ອງກຽມປະຖົມ ຜ່ານກິດຈະກຳວົງມົນ ທີ່ໂຮງຮຽນປະຖົມຂົວທີ 1 ແຂວງຫຼວງພະບາງ. ກຸ່ມເປົ້າໝາຍ ທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ມີຄື: ເດັກນັກຮຽນທັງໝົດຈຳນວນ 30 ຄົນ, ຍິງ 18 ຄົນ ໂດຍນຳໃຊ້ວິທີການຄັດ ເລືອກແບບເຈາະຈົງ ເອົາສະເພາະຫ້ອງ ແລະ ຜູ້ໃຫ້ຂໍ້ມູນທີ່ຕ້ອງການເກັບຂໍ້ມູນທີ່ກ່ຽວຂ້ອງນຳເທົ່ານັ້ນ, ທີ່ໂຮງຮຽນປະຖົມສົມບູນຂົວທີ 1. ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນປະກອບມີບົດສອນ, ແບບທົດສອບ ແລະ ແບບປະເມີນພຶດຕິກຳທັກສະການອ່ານພະຍັນຊະນະປະກອບຮູບພາບ ຫາຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານ, ປະສິດທິພາບຂອງບົດສອນ ($E_1/E_2$) ແລະ ປະສິດທິຜົນ (E.I) ແລ້ວນຳໄປແປຜົນ. ຜົນການຄົ້ນຄວ້າພົບວ່າ: ປະສິດທິພາບຂອງການສອນກ່ຽວກັບການອ່ານພະຍັນຊະນະປະກອບຮູບພາບຂອງເດັກ ຫ້ອງກຽມປະຖົມ ຜ່ານກິດຈະກຳວົງມົນ ເທົ່າກັບ 84.22/86.16 ເຊິ່ງສູງກວ່າເກນທີ່ຕັ້ງໄວ້ 80/80. ປະສິດທິຜົນຂອງການຮຽນຮູ້ກ່ຽວກັບການອ່ານພະຍັນຊະນະປະກອບຮູບພາບຂອງເດັກ ຫ້ອງກຽມປະຖົມຜ່ານກິດຈະກຳວົງມົນ ມີຄ່າເທົ່າກັບ 0.7025 ເຊິ່ງໝາຍຄວາມວ່ານັກຮຽນມີຄວາມຮູ້ເພີ່ມຂຶ້ນຄິດເປັນເປີເຊັນແມ່ນ 70.25% ເຊິ່ງສູງກວ່າເກນທີ່ຕັ້ງໄວ້. ຄວາມສາມາດດ້ານການອອກສຽງກ່ຽວກັບການອ່ານພະຍັນຊະນະປະກອບຮູບພາບຂອງເດັກ ຫ້ອງກຽມປະຖົມ ຜ່ານກິດຈະກຳວົງມົນ ຕາມລຳດັບຂອງຄະແນນສະເລ່ຍ ແລະ ສ່ວນຮ້ອຍຄື: ຄະແນນສະເລ່ຍ 1.60; 1.63; 1.83; 2.03; 2.53 ແລະ 2.63 ແລະ ມີຄ່າສ່ວນຮ້ອຍເທົ່າກັບ 53.33; 54.44; 61.10; 67.77; 84.44 ແລະ 87.77 ຕາມລຳດັບ.

***ຄຳສັບສຳຄັນ:*** *ປະສິດທິພາບ, ປະສິດທິຜົນ, ຄວາມສາມາດດ້ານການອ່ານອອກສຽງ.*

**ຕິດຕໍ່ພົວພັນ: ນາງ ຈາຍພອນ ແສນບຸນເຊືອນ ໂທ: 02054174343*;
*ອີເມວ: schaiphone@gmail.com*

**ຂໍ້ມູນບົດຄວາມ**

Received 6 November 2025
Received in revised form 23 January 2026
Accepted 26 January 2026

This is an open access article under the CC BY license (https://creativecommons.org/licenses/by/4.0/)

*Senbounxeuane, 2026*
**P-ISSN**: 3078-5405; **E-ISSN**: 3080-2628

# The Effectiveness of Circle Activities in Developing Letter Recognition Skills among Preparatory Kindergarten Children at a Primary School in Luang Prabang Province

*Chaiphone SENBOUNXEUANE**
*Department of Preschool Teacher Education, Luangprabang Teacher Training College*

## Abstract

This research aimed to: (1) study the efficiency of lesson plans on reading consonants with picture illustrations based on the 80/80 criterion; (2) examine the effectiveness of learning; and (3) investigate the pronunciation ability in reading consonants with picture illustrations of pre-primary (kindergarten preparatory level) students through circle activities at a Primary School, Luang Prabang Province. The target group used in this study consisted of 30 students, including 18 girls. Purposive sampling was employed by selecting a specific classroom and only the relevant informants from Khuathineung Primary School. The research instruments used for data collection included lesson plans, achievement tests, and a behavioral assessment form measuring reading skills in consonants with picture illustrations. The data were analyzed by calculating the mean, standard deviation, instructional efficiency ($E_1/E_2$), and effectiveness index (E.I.), and then interpreted accordingly. The research findings revealed that the instructional efficiency of teaching reading consonants with picture illustrations for pre-primary students through circle activities was 84.22/86.16, which was higher than the established criterion of 80/80. The effectiveness index (E.I.) of learning was 0.7025, indicating that students' knowledge increased by 70.25%, which was higher than the predetermined criterion. The students' pronunciation ability in reading consonants with picture illustrations through circle activities, based on mean scores and percentages respectively, were as follows: mean scores of 1.60, 1.63, 1.83, 2.03, 2.53, and 2.63; with corresponding percentages of 53.33%, 54.44%, 61.10%, 67.77%, 84.44%, and 87.77%, respectively.

***Keywords:*** *Efficiency, effectiveness, Pronunciation ability.*

**Correspondence: Chaiphone SENBOUNXEUANE; Tel: 02054174343;*
*Email: schaiphone@gmail.com*

**ARTICLE INFO**
Received 6 November 2025
Received in revised form 23 January 2026
Accepted 26 January 2026

## 1. ພາກສະເໜີ

*1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ການສຶກສາແມ່ນຈຸດໃຈກາງຂອງວາລະ 2030 ສໍາລັບການພັດທະນາແບບຍືນຍົງ ມັນຖືກກໍານົດເປັນເປົ້າຫມາຍທີ່ຢືນຢູ່ຄົນດຽວ (ເປົ້າຫມາຍການພັດທະນາແບບຍືນຍົງ 4) ແລະ ຍັງເປັນເປົ້າຫມາຍພາຍໃຕ້ ການພັດທະນາແບບຍືນຍົງ ອື່ນໆ ກ່ຽວກັບສຸຂະພາບ, ການເຕີບໂຕ ແລະ ການຈ້າງງານ, ການບໍລິໂພກ ແລະ ການຜະລິດແບບຍືນຍົງ ແລະ ການປ່ຽນແປງດິນຟ້າອາກາດ. ການສຶກສາແມ່ນສິດທິພື້ນຖານຂອງມະນຸດ ແລະເປັນສິດທິທີ່ເໝາະສົມ . ເພື່ອປະຕິບັດສິດດັ່ງກ່າວ, ປະເທດຕ່າງໆຕ້ອງຮັບປະກັນການເຂົ້າເຖິງການສຶກສາ ແລະ ການຮຽນທີ່ມີຄຸນນະພາບຢ່າງສະເໝີພາບທົ່ວປວງຊົນ, ໂດຍເສລີ ແລະ ບັງຄັບ, ໂດຍບໍ່ມີໃຜຢູ່ເບື້ອງຫຼັງໂດຍບໍ່ນັບຖືເພດ, ຄວາມພິການ, ສະພາບເສດຖະກິດສັງຄົມ. ການສຶກສາຕ້ອງມຸ່ງໄປເຖິງການພັດທະນາບຸກຄະລາກອນມະນຸດຢ່າງຄົບຖ້ວນ, ຊຸກຍູ້ຄວາມເຂົ້າໃຈ, ຄວາມອົດທົນ, ມິດຕະພາບ ແລະ ສັນຕິພາບ. ການສຶກສາຄວນໄປນອກເໜືອກວ່າທັກສະການຮູ້ໜັງສືຂັ້ນພື້ນຖານ ແລະ ຕົວເລກ ແລະ ເຮັດໃຫ້ບຸກຄົນມີຄວາມຄິດສ້າງສັນ, ມີຄວາມຄິດສ້າງສັນ ແລະ ທັກສະການຮ່ວມມື, ໃນຂະນະທີ່ສ້າງຄວາມຢາກຮູ້ຢາກເຫັນ, ຄວາມກ້າຫານ ແລະ ຄວາມຍືດຢຸ່ນ. ຮອດປີ 2030, ຮັບປະກັນໃຫ້ເດັກຍິງ ແລະ ເດັກຊາຍທຸກຄົນໄດ້ເຂົ້າເຖິງການພັດທະນາເດັກກ່ອນໄວຮຽນທີ່ມີຄຸນນະພາບ, ການດູແລ ແລະ ການສຶກສາກ່ອນປະຖົມເພື່ອໃຫ້ເຂົາເຈົ້າມີຄວາມພ້ອມໃນການສຶກສາປະຖົມ (Global Campaign for Education , 2024)

ການສຶກສາແມ່ນຂະບວນການສອນ, ການຮຽນຮູ້ທາງດ້ານທິດສະດີ ແລະ ພຶດຕິກຳຕົວຈິງກ່ຽວກັບວິທະຍາສາດ, ວິທະຍາສາດສັງຄົມ ແລະ ເຕັກໂນໂລຊີ. ເພື່ອພັດທະນາຊັບພະຍາກອນມະນຸດໃຫ້ຂະຫຍາຍຕົວຮອບດ້ານ. ດັ່ງນັ້ນ, ພັກ-ລັດ ຈຶ່ງກຳນົດເອົາການສຶກສາເປັນວຽກງານໃຈກາງຂອງການພັດທະນາຊັບພະຍາກອນມະນຸດ ແລະ ສົ່ງເສີມທຸກເພດໄວ, ທຸກເຜົ່າໃຫ້ເຂົ້າເຖິງການສຶກສາ, ລັດຖະບານຈຶ່ງໄດ້ເອົາໃຈໃສ່ຂະຫຍາຍການສຶກສາກ່ອນໄວຮຽນ, ສົ່ງເສີມສຸຂະພາບ, ໂພສະນາການຂັ້ນພື້ນຖານໃນໂຮງຮຽນ ແລະ ກຳນົດເອົາການສຶກສາພາກບັງຄັບເປັນການສຶກສາທີ່ບໍ່ເສຍຄ່າ, ເພີ່ມທະວີການລົງທຶນໃສ່ການ

ພັດທະນາການສຶກສາ ເປັນຕົ້ນການພັດທະນາຄູ, ການພັດທະນາຫຼັກສູດ ແລະ ການພັດທະນາວິທີສອນ (ສະພາແຫ່ງຊາດ, 2015)

ການສຶກສາເດັກກ່ອນໄວຮຽນເປັນວຽກງານທີ່ສຳຄັນຫຼາຍ ເພາະເດັກປຽບສະເໝືອນໜໍ່ແໜງຂອງປະເທດຊາດເປັນຜູ້ສືບທອດໃນອານາຄົດ ຖ້າເດັກເປັນຜູ້ທີ່ມີຄວາມຮູ້, ຄວາມສາມາດ ສະຫຼາດກໍ່ສົ່ງຜົນເຖິງຄວາມກ້າວໜ້າຂອງປະເທດຊາດເໝືອນ ດັ່ງສຸພາສິດທີ່ເພິ່ນໄດ້ກ່າວໄວ້ວ່າ: “ເດັກສະຫຼາດ ພາຊາດຈະເລີນ” ດັ່ງນັ້ນເພື່ອໃຫ້ມີຄວາມສອດຄ່ອງ ແລະ ເປັນໄປຕາມນະໂຍບາຍການສຶກສາຂອງກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ ກໍ່ໄດ້ຖືເອົາວຽກງານການພັດທະນາເດັກກ່ອນໄວຮຽນ ເປັນໜຶ່ງໃນບຸລິມະສິດຂອງການສຶກສາຂັ້ນພື້ນຖານ ດັ່ງທີ່ຕາມຫຼັກສູດການສຶກສາເດັກກ່ອນໄວຮຽນສະບັບປັບປຸງໃໝ່ໃນປີ 2012 ແມ່ນມີຈຸດປະສົງເນັ້ນໃສ່ພັດທະນາເດັກອາຍຸແຕ່ 3 ຫາ 6 ປີ ຕາມ 5 ຫຼັກມູນການສຶກສາຄື: ຄຸນສົມບັດສຶກສາ, ປັນຍາສຶກສາ, ສິລະປະສຶກສາ, ພາລະສຶກສາ, ແຮງງານສຶກສາ ໂດຍຈັດການສຶກສາອົບຮົມ-ລ້ຽງດູ, ສົ່ງເສີມຂະບວນການຮຽນທີ່ຕອບສະໜອງຕໍ່ທຳມະຊາດໂດຍຈັດການຮຽນການສອນໃຫ້ເດັກໄດ້ຮຽນຮູ້ຈາກການນຳໃຊ້ປະສາດສຳຜັດທັງ 5 ເຊັ່ນ ໄດ້ເຫັນ, ໄດ້ຟັງ, ໄດ້ດົມກິ່ນ, ໄດ້ຊີມລົດຊາດ, ໄດ້ສຳຜັດ ດ້ວຍຕົນເອງ ແລະ ການພັດທະນາເດັກຊັ້ນອະນຸບານແມ່ນບາດກ້າວເບື້ອງຕົ້ນທີ່ສຳຄັນໃນການພັດທະນາຊັບພະຍາກອນມະນຸດໃຫ້ມີການຂະຫຍາຍຕົວ ແລະ ເປັນການກຽມຄວາມພ້ອມ ທາງດ້ານຮ່າງກາຍ, ອາລົມ, ຄວາມປອດໄພ; ດ້ານພາສາ, ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ; ດ້ານອາລົມ - ຈິດໃຈ ແລະ ດ້ານສັງຄົມ ເຊິ່ງເປັນພື້ນຖານສຳລັບການຮຽນຮູ້ໃນຊັ້ນປະຖົມສຶກສາ ແລະ ຂັ້ນຕໍ່ໆໄປ (ກະຊວງສຶກສາທິການ ແລະ ກິລາ, 2012, ໜ້າ. 4). ເດັກໃນໄວທີ່ເກີດໃໝ່ເຖິງ 5 ປີ ເປັນໄວທີ່ເດັກມີການຈະເລີນເຕີບໂຕໃນດ້ານຮ່າງກາຍຢ່າງເຫັນໄດ້ແຈ້ງໃນສ່ວນຂອງພາສາກໍມີການພັດທະນາຢ່າງຕໍ່ເນື່ອງຄ່ອຍເປັນຄ່ອຍໄປ ຫາກໄດ້ຮັບການສົ່ງເສີມທັກສະທາງພາ ສາຢ່າງພຽງພໍຈະເຮັດໃຫ້ການຮຽນຮູ້ຂອງເດັກເປັນໄປໄດ້ດີຍິ່ງຂຶ້ນເຊິ່ງຈະສົ່ງຜົນຕໍ່ພັດທະນາການທາງສັງຄົມ ແລະ ສະຕິປັນຍາ ເດັກໃນໄວນີ້ຈະເລີ່ມເປັ່ງສຽງອໍ້ແອ້ຕາມທຳມະຊາດ ແລະ ຄ່ອຍເລີ່ມເວົ້າຄຳທີ່ມີຄວາມໝາຍຄຳທຳອິດໄດ້ເມື່ອອາຍຸ 8 ເດືອນ 1 ປີ ເຊັ່ນຄຳວ່າ "ແມ່" ຈາກນັ້ນກໍຈະເວົ້າຄຳຕ່າງໆ ໄດ້ຫຼາຍຂຶ້ນຈົນສາມາດເວົ້າເປັນປະໂຫຍກໄດ້ ການສົ່ງເສີມຄວາມສາມາດທາງພາສາໃຫ້ກັບເດັກນັ້ນສາມາດເຮັດໄດ້ຫຼາຍວິທີ ອາດເລີ່ມຕັ້ງແຕ່ ການເລົ່ານິທານໃຫ້ຟັງ ການຫຼິ້ນຫຸ່ນນິ້ວມື, ການຫຼິ້ນທວາຍບັນຫາ, ເວົ້າບົດທ່ອງ, ຮ້ອງເພງ ຫຼື ແມ່ນແຕ່ການສົນທະນາລະຫວ່າງເດັກກັບຜູ້ໃກ້ຊິດໃນສະຖານະການຕ່າງໆ ພໍ່ແມ່ເປັນບຸກຄົນສຳຄັນທີ່ສຸດໃນການສົ່ງເສີມພັດທະນາການຂອງລູກ (ສຳນັກງານ ຄະນະກຳມະການການສຶກສາແຫ່ງຊາດ, 2001, ໜ້າ. 48-53).

ການອ່ານຊ່ວຍນັກຮຽນເລີ່ມຮູ້ຈັກການຈຳແນກຕົວອັກສອນ ແລະ ຮູບພາບ, ຮູ້ທິດທາງຂອງ ການອ່ານ, ບອກຕົວອັກສອນ ແລະ ຄຳສັບ, ນັກຮຽນບາງຄົນອາດຈະບໍ່ເຄີຍເຫັນປຶ້ມເລື່ອງຢູ່ເຮືອນມາກ່ອນທີ່ຈະເຂົ້າຮຽນຫ້ອງກຽມ ແລະ ຕ້ອງໄດ້ຮຽນພື້ນຖານການອ່ານກ່ອນ, ລວມເຖິງຄວາມແຕກຕ່າງລະຫວ່າງຕົວອັກສອນ ກັບ ຮູບພາບ, ທິດທາງການອ່ານ, ຕົວອັກສອນ ແລະ ຄຳສັບ, ນັກຮຽນທຸກຄົນຕ້ອງຮຽນກ່ຽວກັບການບົວລະບັດການຮັກສາປຶ້ມ. ໃນກິດຈະກຳການກຽມອ່ານ, ນັກຮຽນຈະຈື່ບາງຕົວອັກສອນ ແລະ ຄຳສັບພື້ນຖານ, ເຊິ່ງມີຢູ່ໃນປຶ້ມເລື່ອງທີ່ ໄດ້ໃຊ້ໃນອາທິດນັ້ນ. ຢູ່ໃນປຶ້ມບົດສອນຕ້ອງໃຫ້ລະອຽດກ່ຽວກັບຄຳສັບ ແລະ ຕົວອັກສອນໃດທີ່ຄວນຍໍ້າຕື່ມເວລາ ອ່ານປຶ້ມເລື່ອງ, ໃນປຶ້ມບົດສອນມີວິທີການສຳລັບກິດຈະກຳເພື່ອຊ່ວຍນັກຮຽນຈຳແນກຕົວອັກສອນ ແລະ ຄຳສັບ (ແສງມະນີ ສຸພັນທະລິບ, 2022, ໜ້າ. 7). ການພັດທະນາທັກສະທາງດ້ານພາສາຂອງເດັກໃຫ້ມີສັກກາຍະພາບຢ່າງຕໍ່ເນື່ອງຂໍ້ກຳນົດໃນມາດຕະຖານ ທີ່ທາງ ກະຊວງສຶກສາທິການ ແລະ ກິລາ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (2012) ໄດ້ລະບຸມາດຕະຖານທາງດ້ານພາສາຂອງເດັກອາຍຸ 3-5 ປີໄວ້ 3 ມາດຖານຄື: ມາດຖານທີ 1: ຟັງ, ເບິ່ງ, ເວົ້າສື່ສານໃນຊີວິດປະຈຳວັນໄດ້ເໝາະສົມກັບໄວອາຍຸ, ມາດຖານທີ 2: ອ່ານປຶ້ມ ແລະ ສ້າງຄວາມຮູ້, ທັກສະໃນການອ່ານ ແລະ ສ້າງນິດໄສຮັກການອ່ານໄດ້ເໝາະສົມກັບໄວອາຍຸ, ມາດຖານທີ 3: ຂຽນຕົວອັກສອນລາວ ແລະ ສ້າງຄວາມຮູ້, ທັກສະໃນການຂຽນ, ສ້າງນິດໄສຮັກການຂຽນໄດ້ເໝາະສົມກັບໄວອາຍຸ. ເພື່ອໃຫ້ເດັກເຕີບໂຕຢ່າງມີຄຸນນະພາບ ສາມາດໃຊ້ພາສາເພື່ອການສື່ສານ ແລະ ຢູ່ຮ່ວມກັບຜູ້ອື່ນໃນສັງຄົມໄດ້ຢ່າງມີຄວາມສຸກ, ເພື່ອໃຫ້ເກີດຄວາມເຂົ້າໃຈໃນທິດທາງດຽວກັນໃນການສົ່ງເສີມພັດທະນາການຂອງເດັກ, ເພື່ອຈະຫາວິທີສົ່ງເສີມໄດ້ຢ່າງຖືກຕ້ອງ ແລະ ເໝາະສົມ ໂດຍໃຊ້ກິດຈະກຳທີ່ເຮັດຮ່ວມກັນໃນການສົ່ງເສີມພັດທະນາການ ການສື່ສານສາມາດເຮັດໄດ້ຫຼາຍວິທີບໍ່ວ່າຈະເປັນການສົນທະນາແລກປ່ຽນຄວາມຮູ້ ຫຼື ການອ່ານ ຫຼື ນຳພາສົນທະນາໃຫ້ຫຼາຍຂຶ້ນ ເພື່ອໃຫ້ເດັກມີຄວາມຄຸ້ນເຄີຍ, ມີຄວາມສົນໃຈໃນການອ່ານພະຍັນຊະນະປະກອບຮູບພາບ ແລະ ມີນິໄສຮັກການອ່ານຕັ້ງແຕ່ຍັງເປັນເດັກເພື່ອເປັນພື້ນຖານໃນການຮຽນໃນຂັ້ນຕໍ່ໄປ.

ຈາກຄວາມສຳຄັນທີ່ກ່າວມານັ້ນ ຜູ້ວິໄຈຈຶ່ງມີຄວາມສົນໃຈທີ່ຈະສຶກສາເຖິງຜົນຂອງການຈັດກິດຈະກຳພັດທະ ນາທັກສະການອ່ານບັດຄຳປະກອບຮູບພາບສຶກສາບັນຫາໃນຈັດກິດຈະກຳພັດ

**P-ISSN**: 3078-5405; **E-ISSN**: 3080-2628

ທະນການອ່ານຂອງເດັກກ່ອນໄວຮຽນ ໂດຍນຳໃຊ້ກິດຈະກຳອິງມຶນເປັນຕົວຊ່ວຍໃນການຈັດກິດຈະກຳການຮຽນ-ການສອນ ຂັ້ນຫ້ອງກຽມປະຖົມ ພາກຮຽນທີ 2 ສົກຮຽນ 2023-2004. ເພື່ອນຳຜົນການສຶກສາມາເປັນແນວທາງໃນການສົ່ງເສີມທັກສະການອ່ານທາງພາສາຂອງເດັກໃນຂັ້ນຕໍ່ໄປ.

*1.2. ຄຳຖາມຂອງການຄົ້ນຄ້ວາ*

1. ປະສິດທິພາບຂອງບົດສອນກ່ຽວກັບການອ່ານພະຍັນຊະນະປະກອບຮູບພາບຂອງເດັກ ໂດຍນຳໃຊ້ກິດຈະກຳອິງມຶນຈະມີຜົນໄດ້ຮັບເປັນຄືແນວໃດ ?

2. ປະສິດທິຜົນຂອງການຮຽນຮູ້ກ່ຽວກັບການອ່ານພະຍັນຊະນະປະກອບຮູບພາບຂອງເດັກ ຫ້ອງກຽມປະຖົມ ຜ່ານກິດຈະກຳອິງມຶນ ສູງກວ່າເກນ ຫຼື ບໍ?

3. ຄວາມສາມາດດ້ານການອອກສຽງກ່ຽວກັບການອ່ານພະຍັນຊະນະປະກອບຮູບພາບຂອງເດັກ ໂດຍນຳໃຊ້ກິດຈະກຳອິງມຶນ ຂອງເດັກຫ້ອງກຽມປະຖົມເປັນແນວໃດ?

*1.3. ຈຸດປະສົງຂອງການຄົ້ນຄ້ວາ*

1. ເພື່ອສຶກສາປະສິດທິພາບຂອງບົດສອນກ່ຽວກັບການອ່ານພະຍັນຊະນະປະກອບຮູບພາບຂອງເດັກ ໂດຍນຳໃຊ້ກິດຈະກຳອິງມຶນ ຫ້ອງກຽມປະຖົມ ທີ່ໂຮງຮຽນປະຖົມຊົວທີ 1 ແຂວງຫຼວງພະບາງ ຕາມເກນ 80/80.

2. ເພື່ອສຶກສາປະສິດທິຜົນຂອງການຮຽນຮູ້ກ່ຽວກັບການອ່ານພະຍັນຊະນະປະກອບຮູບພາບຂອງເດັກ ໂດຍນຳໃຊ້ກິດຈະກຳອິງມຶນ ຫ້ອງກຽມປະຖົມ ທີ່ໂຮງຮຽນປະຖົມຊົວທີ 1 ແຂວງຫຼວງພະບາງ.

3. ເພື່ອສຶກສາຄວາມສາມາດດ້ານການອອກສຽງກ່ຽວກັບການອ່ານພະຍັນຊະນະປະກອບຮູບພາບຂອງເດັກ ໂດຍນຳໃຊ້ກິດຈະກຳອິງມຶນ ຫ້ອງກຽມປະຖົມ ທີ່ໂຮງຮຽນປະຖົມຊົວທີ 1 ແຂວງຫຼວງພະບາງ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ເພັດສະໝອນ ສຸຂະວິໄຊ (2021) ພ້ອມດ້ວຍຄະນະທີ່ວິໄຈໃນຫົວຂໍ້ ກ່ຽວກັບສຶກສາການຈັດການຮຽນການສອນ ກິດຈະກຳອິງມຶນ ທັກສະການເວົ້າອອກສຽງຄຳສັບ ແລະ ປະໂຫຍກສັ້ນ ຕາມຮູບພາບ ຂອງເດັກຂັ້ນອະນຸບານ 2 ທີ່ໂຮງຮຽນອະນຸບານສາທິດ ວິທະຍາໄລຄູຫຼວງພະບາງ ສົກຮຽນ 2021-2022. ທີ່ມີຈຸດປະສົງ ເພື່ອສົ່ງເສີມທັກສະການເວົ້າອອກສຽງຄຳສັບ ແລະ ປະໂຫຍກສັ້ນ ຕາມຮູບພາບ ຂອງເດັກຂັນອະນຸບານ 2 ແລະ ເພື່ອສຶກສາ ຜົນການຮຽນກິດຈະກຳອິງມຶນ ທັກສະການເວົ້າອອກສຽງຄຳສັບ ແລະ ປະໂຫຍກສັ້ນ ຕາມຮູບພາບ ຂອງເດັກຂັນອະນຸບານ, ປະຊາກອນ ແລະ ກຸ່ມຕົວຢ່າງ ທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ມີຄື: ເດັກນັກຮຽນທັງໝົດຈຳນວນ 21 ຄົນ, ຍິງ 8 ຄົນ. ໂດຍເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນຄື: ບົດສອນ, ແບບສັງເກດພຶດຕິກຳຜົນການຮຽນເດັກ ຈຳນວນ 5 ເນື້ອໃນ. ຜົນການຄົ້ນຄວ້າຈາກແບບປະເມີນພົບວ່າ ໃນການຮຽນພາສາລາວ ສັງເກດແອບເວົ້າທັກສະການເວົ້າອອກສຽງຄຳສັບ ແລະ ປະໂຫຍກສັ້ນ ຕາມຮູບພາບ ຂອງເດັກຂັ້ນອະນຸບານ 2 ດີຂຶ້ນແບບຕໍ່ເນື່ອງໃນໄລຍະ 6 ອາທິດຕາມລຳດັບຂອງເປີເຊັນສ່ວນຮ້ອຍຄື: 46.98; 49.84; 54.60; 61.59; 71.75 ແລະ 87.62 . ພົນທອງ, ສຸຂະວິໄຊ, ແສນບຸນເຊືອນ, ວັນນະພາ, & ຄູນສະຫວັດ (2024) ການພັດທະນາທັກສະການອ່ານຄຳສັບ ໂດຍນຳໃຊ້ມູມອ່ານ ຂັ້ນອະນຸບານ 2 ທີ່ໂຮງຮຽນອະນຸບານສາທິດຂອງວິທະຍາໄລຄູຫຼວງພະບາງ ມີຈຸດປະສົງຄື ເພື່ອສຶກສາພັດທະນາການ ການອ່ານຄຳສັບຂອງເດັກ ໂດຍນຳໃຊ້ມູມອ່ານ ແລະ ເພື່ອປຽບທຽບຜົນການອ່ານຄຳສັບຂອງເດັກ ໂດຍນຳໃຊ້ມູມອ່ານ ຂັ້ນອະນຸບານ 2 ກ່ອນ ແລະ ຫຼັງຮຽນ ທີ່ໂຮງຮຽນອະນຸບານສາທິດຂອງວິທະຍາໄລຄູຫຼວງພະບາງ ພາກຮຽນທີ I ສົກຮຽນ 2024-2025 ຜົນການຄົ້ນຄວ້າພົບວ່າ: 2.) ພັດທະນາການ ການອ່ານຄຳສັບຂອງເດັກ ໂດຍນຳໃຊ້ມູມອ່ານ ຂັ້ນອະນຸບານ 2 ແມ່ນເຫັນໄດ້ວ່າ ເດັກຂັ້ນອະນຸບານ 2 ເດັກແມ່ນມີພັດທະນາການການອອກສຽງຄຳສັບດີຂຶ້ນແບບຕໍ່ເນື່ອງໃນໄລຍະ 3 ອາທິດຕາມລຳດັບຂອງຄະແນນສະເລ່ຍ ແລະ ເປີເຊັນສ່ວນຮ້ອຍຄື: ຄະແນນສະເລ່ຍ 1.75; 1.78; 1.93; 1.94; 2.16 ແລະ ເປີເຊັນສ່ວນຮ້ອຍເທົ່າ 58.33; 59.29; 64.42; 64.74; 72.12. 3) ຜົນການອ່ານຄຳສັບຂອງເດັກ ໂດຍນຳໃຊ້ມູມອ່ານ ຂັ້ນອະນຸບານ 2 ກ່ອນ ແລະ ຫຼັງຮຽນ ເຫັນວ່າ ທັກສະດ້ານການອ່ານອອກສຽງຄຳສັບ ຂອງເດັກ ຂັ້ນອະນຸບານ 2 ໂດຍການຈັດການຮຽນຮູ້ໂດຍການຈັດກິດຈະກຳໃນມູມອ່ານ ມີຜົນສຳເລັດທາງການຮຽນຫຼັງການຮຽນສູງ ກວ່າກ່ອນຮຽນ ໂດຍມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ເຊິ່ງມີຄະແນນສະເລ່ຍກ່ອນຮຽນ ເທົ່າກັບ 1.59 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.37 ແລະ ທັກສະການອ່ານອອກສຽງຄຳສັບ ຫຼັງການຈັດການຮຽນຮູ້ໂດຍການຈັດກິດຈະກຳໃນມູມອ່ານ ມີ ຄະແນນເສລີ່ຍ ເທົ່າກັບ 2.37 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.51. ປະພັດສອນ ສາລະພັນ (2017) ໄດ້ວິໄຈກ່ຽວກັບຫົວຂໍ້: ເລື່ອງການພັດທະນາທັກສະການອ່ານຂອງເດັກກ່ອນໄວຮຽນ ຊັ້ນອະນຸບານ 3 ສູນພັດທະນາເດັກນ້ອຍໂຮງຮຽນອະນຸບານອິນທິບູລີ ໂດຍໃຊ້ກິດຈະກຳການເລົ່ານິທານ ແລະ ເວົ້າຄຳສັບ.ການວິໄຈ ຄັ້ງນີ້ມີ ຈຸດປະສົງເພື່ອປຽບທຽບພຶດຕິກຳການເວົ້າຂອງນັກ ຮຽນຊັ້ນ ອນຸບານ 3 ກ່ອນ ແລະ ຫຼັງ ໃຊ້ຊຸດນິທານ ໂດຍກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈ

ຄັ້ງນີ້ເປັນເດັກນັກຮຽນຊັ້ນອະນຸບານ 3 ຈຳນວນ 20 ຄົນ ໃນປີການສຶກສາ 2560 ເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ ໄດ້ກຳນົດເຄື່ອງມືທີ່ໃຊ້ໃນການວິໄຈພື້ນຖານທີ່ສ້າງຂຶ້ນເອງດັ່ງນີ້. ແຜນການຈັດປະສົບການ(ກິດຈະກຳເສີມປະສົບການ) ຈຳນວນ 3 ແຜນ ຊຶ່ງເປັນຊຸດນິທານຈຳນວນ 3 ຊຸດ, 2. ແບບປະເມີນພຶດຕິກຳການເວົ້າ ກ່ອນ – ຫຼັງ ການໃຊ້ຊຸດນິທານຜົນການວິໄຈ ພົບວ່າການປະຕິກິດບັດຈະກຳການເລົ່ານິທານສຳລັບເດັກ ໃນ 3 ອາທິດ ເປັນການເກັບຄະແນນຈາກກຸ່ມເປົ້າໝາຍ 20 ຄົນ ທີ່ເປັນເດັກໃນຫ້ອງອະນຸບານ 3 ໂຮງຮຽນອະນຸບານອິນທິບູລິມີຄະແນນຈາກຜົນການປະຕິບັດກິດຈະກຳການເລົ່ານິທານລາຍອາທິດ ຕະຫຼອດ 3 ອາທິດ ມີຄ່າສະເລ່ຍຮ້ອຍລະສະແດງຄວາມກ້າວໜ້າ ຈາກ 85.73; 93.20 ແລະ 94.99 ຕາມລຳດັບ. ພິມລະພິນ ພົງປະເສີດ (2563)ໄດ້ເຮັດການຄົ້ນຄ້ວາກ່ຽວກັບ ການພັດທະນາຄວາມສາມາດດ້ານການອ່ານ ແລະ ການຂຽນສະກົດ ຄຳຂອງນັກຮຽນຊັ້ນປະຖົມສຶກສາປີທີ່ 1 ໂດຍການຈັດການຮຽນຮູ້ຕາມຮູບແບບກ່ຽວກັບແບບຝຶກທັກສະ ການວິໄຈຄັ້ງນີ້ມີວັດຖຸປະສົງເພື່ອ 1) ປຽບທຽບຄວາມສາມາດດ້ານການອ່ານແລະການຂຽນ ສະກົດຄຳຂອງນັກຮຽນຊັ້ນປະຖົມສຶກສາປີທີ່ 1 ກ່ອນ ແລະ ຫຼັງການຈັດການຮຽນຮູ້ຕາມຮູບແບບຂອງກ່ຽວກັບແບບຝຶກທັກສະ 2) ສຶກສາຄວາມຄິດເຫັນຂອງນັກຮຽນຊັ້ນປະຖົມສຶກສາປີທີ່ 1 ທີ່ມີຕໍ່ການຈັດການ ຮຽນຮູ້ຕາມຮູບແບບຂອງການຝຶກທັກສະ ກຸ່ມຕົວຢ່າງ ໄດ້ແກ່ ນັກຮຽນຊັ້ນປະຖົມສຶກສາປີທີ່ 1/2 ໂຮງຮຽນອະນຸບານວັດບາງນາງບຸຍ ອຳເພີເມືອງ ແຂວງປະທຸມທານີຈຳນວນ 20 ຄົນ ທີ່ກຳລັງສຶກສາໃນພາກຮຽນທີ່ 2 ປີການສຶກສາ 2563 ໂດຍມາຈາກການສຸ່ມຢ່າງງ່າຍ (Simple Random Sampling) ໂດຍໃຊ້ ຫ້ອງຮຽນເປັນຫົວໜ່ວຍການສຸ່ມ ເຄື່ອງມືທີ່ໃຊ້ໃນການວິຈັຍເທື່ອນີ້ປະກອບດ້ວຍ 1) ແຜນການຈັດການຮຽນຮູ້ຕາມຮູບແບບກ່ຽວກັບແບບຝຶກທັກສະ 2) ແບບຝຶກທັກສະການອ່ານ ແລະ ການຂຽນສະກົດຄຳ 3) ແບບທົດສອບວັດຄວາມສາມາດດ້ານການອ່ານສະກົດຄຳແລະການຂຽນສະກົດຄຳ ແລະ 4) ແບບສອບຖາມ ຄວາມຄິດເຫັນຂອງນັກຮຽນຊັ້ນປະຖົມສຶກສາປີທີ່ 1 ທີ່ມີຕໍ່ຮູບແບບທີ່ໃຊ້ໃນການທົດລອງແບບກຸ່ມມທົດລອງໜຶ່ງກຸ່ມມີການທົດສອບກ່ອນຮຽນ ແລະ ຫຼັງຮຽນ ສຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ ໄດ້ແກ່ຄ່າສະເລ່ຍ (X) ສ່ວນຄ່າຜັນປ່ຽນມາດຕະຖານ (S.D) ແລະ ຄ່າສະຖິຕິທົດສອບທີແບບບໍ່ອິດສະຫຼະຕໍ່ກັນ (Dependent Samples t-test) ຜົນການວິໄຈພົບວ່າ 1. ຄວາມສາມາດດ້ານການອ່ານ ແລະ ການຂຽນສະກົດຄຳຂອງນັກຮຽນຊັ້ນປະຖົມສຶກສາປີທີ່ 1 ຫຼັງການຈັດການຮຽນຮູ້ຕາມຮູບແບບກັບແບບຝຶກທັກສະສູງກວ່າກ່ອນຮຽນຢ່າງມີໄນສຳຄັນທາງສະຖິຕິທີ່ລະດັບ .01

ຈາລິຍາ ສຸກແກ້ວ (2565) ໄດ້ສຶກສາກ່ຽວກັບ ການພັດທະນາຄວາມສາມາດການອ່ານຄຳສັບໂດຍໃຊ້ກິດຈະກຳການຮຽນຮູ້ຕາມແນວຄິດສະໝອງເປັນພື້ນຖານຮ່ວມກັບການໃຊ້ແບບຝຶກທັກສະສຳລັບນັກຮຽນຊັ້ນປະຖົມສຶກສາປີທີ 1 ມີຈຸດປະສົງຄື: 1) ປຽບທຽບຄວາມສາມາດດ້ານການອ່ານຄຳຂອງນັກຮຽນ ກ່ອນ ແລະ ຫຼັງ. 2) ສຶກສາຄວາມເພິ່ງພໍໃຈ ຜົນວິໄຈພົບວ່າ: ຜົນການທົດສອບຄວາມສາມາດອ່ານຄຳກ່ອນ ແລະ ຫຼັງການຈັດກິດຈະກຳການຮຽນຮູ້ຕາມແນວຄິດສະໝອງເປັນຖານ ລວມການໃຊ້ແບບຝຶກທັກສະພົບວ່າຄະແນນສະເລ່ຍຫຼັງຮຽນສູງກວ່າກ່ອນຮຽນ ມີຄວາມສຳພັນທາງສະຖິຕິ .05, ຜົນການສຶກສາຄວາມເພິ່ງພໍໃຈຂອງນັກຮຽນຊັ້ນປະຖົມສຶກສາປີທີ 1 ໃນພາບລວມຢູ່ໃນລະດັບຫຼາຍ ຄ່າສະເລ່ຍ 4.48, ຄ່າຜັນປ່ຽນມາດຕາຖານ 0.15

ສຸວັນນີ ຍະທະກອນ (2555) ຜົນການໃຊ້ໜັງສືເອເລັກໂທນິກເລື່ອງການອ່ານຄຳທີ່ມີວັນນາຍຸດ ທີ່ມີຕໍ່ສົມຜົນສຳເລັດທາງການຮຽນວິຊາພາສາໄທ ຂອງນັກຮຽນຊັ້ນປະຖົມສຶກສາປີທີ 1 ໂຮງຮຽນນິຄົມສ້າງຕົນເອງ ຈັ່ງຫວັດລະຍອງ 6 ມີຈຸດປະສົງຄື: ພັດທະນາໜັງສືເອເລັກໂທນິກເລື່ອງການອ່ານຄຳທີ່ມີວັນນາຍຸດ ທີ່ມີຕໍ່ສົມຜົນສຳເລັດທາງການຮຽນວິຊາພາສາໄທ ໃຫ້ມີປະສິດທິພາບເກນ 80/80 ປຽບທຽບຜົນທາງການຮຽນພາສາໄທເລື່ອງການອ່ານຄຳສັບທີ່ມີວັນນະຍຸດຂອງນັກຮຽນ ຊັ້ນປະຖົມສຶກສາປີທີ 1 ລະຫວ່າງກ່ອນ ແລະ ຫຼັງ. ຜົນການຄົ້ນຄວ້າພົບວ່າ: 1) ໜັງສືເອເລັກໂທນິກດ້ານການອ່ານຄຳມີວັນນະຍຸດຂອງນັກຮຽນ ມີປະສິດທິພາບ 83.85/83.30 ເຊິ່ງສູງກວ່າເກນທີ່ກຳນົດ ແລະ 2) ຄະແນນສະເລ່ຍຄວາມສາມາດການອ່ານຄຳທີ່ມີວັນນະຍຸດຂອງນັກຮຽນໂດຍໃຊ້ໜັງສືເອເລັກໂທນິກຫຼັງຮຽນສູງກວ່າກ່ອນຮຽນມີຄວາມສຳຄັນທາງສະຖິຕິ .05. ກັນກຣົດ ວົງຍະລາ (2565) ໄດ້ຄົ້ນຄວ້າ ການພັດທະນາກິດຈະກຳການອ່ານ ໂດຍໃຊ້ສື່ວັນນະກຳທ້ອງຖິ່ນ ຕາມແນວການອ່ານເສີມຕໍ່ການຮຽນຮູ້ ເພື່ອເສີມສ້າງຄວາມສາມາດໃນການອ່ານພາສາໄທຄຳທີ່ສະກົດບໍ່ຕົງມາດຕາຂອງນັກຮຽນຂັ້ນປະຖົມສຶກສາປີທີ 2 ມີຈຸດປະສົງ: ສ້າງ ແລະ ຫາດັດສະນີປະສິດທິຜົນຂອງກິດຈະກຳການອ່ານ ໂດຍໃຊ້ສື່ນະວັດຕະກຳທ້ອງຕາມແນວການອ່ານແບບເສີມຄວາມສາມາດໃນການອ່ານພາສາໄທ. 2) ປຽບທຽບຄວາມສາມາດດ້ານການອ່ານອອກສຽງຄຳທີສະກົດບໍ່ຖືກມາດຕາ ກ່ອນ ແລະ ຫຼັງຮຽນ. 3) ສຶກສາຄວາມເພິ່ງພໍໃຈຂອງນັກຮຽນທີ່ມີຕໍ່ການຮຽນດ້ວຍກິດຈະກຳການອ່ານ ໂດຍໃຊ້ສື່ນະວັດຕະກຳທ້ອງຖິ່ນ ຜົນ ຄົ້ນຄວ້າພົບວ່າ: 1) ກິດຈະກຳການອ່ານໂດຍໃຊ້ສື່ນະວັດຕະກຳທ້ອງຖິ່ນຕາມແນວການອ່ານແບບເສີມຕໍ່ການຮຽນຮູ້ເພື່ອເສີມສ້າງຄວາມສາມາດໃນການອ່ານພາສາໄທ ຢູ່ໃນລະດັບ ຫຼາຍ ຄ່າສະເລ່ຍ 4.43, SD=0.05 ແລະ

**P-ISSN**: 3078-5405; **E-ISSN**: 3080-2628

2) ມີຄ່າດັດສະນີປະສິດທິຜົນກິດຈະກຳການອ່ານເທົ່າກັບ 0.57, ນັກຮຽນມີຄວາມສາມາດໃນການອ່ານພາສາໄທຄຳທີ່ຕົວສະກົດບໍ່ຖືກມາດຕາ ຫຼັງຮຽນກິດຈະກຳການອ່ານ ໂດຍໃຊ້ສື່ນະວັດຕະກຳທ້ອງຖິ່ນຕາມແນວການອ່ານເສີມຕໍ່ການຮຽນຮູ້ຫຼັງຮຽນສູງກວ່າກ່ອນຮຽນ ຢ່າງມີຄວາມສຳຄັນທາງສະຖິຕິ .05 3) ນັກຮຽນມີຄວາມເພິ່ງພໍໃຈຕໍ່ການອ່ານໂດຍໃຊ້ສື່ນະວັດຕະກຳທ້ອງຖິ່ນຢູ່ໃນລະດັບຫຼາຍທີ່ສຸດ ຄ່າສະເລ່ຍເທົ່າກັບ 4.68, SD=0.23. ຄຳປັນ ບຸນເລີດ (2553) ໄດ້ຄົ້ນຄວ້າຫົວຂໍ້ ການໃຊ້ເຕັກໂນໂລຢີອຳນວຍຄວາມສະດວກເພື່ອພັດທະນາທັກສະການອ່ານຂອງນັກຮຽນທີ່ມີບັນຫາທາງການຮຽນ ມີຈຸດປະສົງຄື: ເພື່ອສ້າງ ແລະ ສຶກສາຜົນການໃຊ້ໂປຣແກມເທັກໂນໂລຊີອຳນວຍຄວາມສະດວກໃນການພັດທະນາທັກສະການອ່ານຂອງນັກຮຽນທີ່ມີບັນຫາທາງການຮຽນ ຜົນການຄົ້ນຄວ້າພົບວ່າ: 1) ປະສິດທິພາບຂອງການໃຊ້ໂປຼແກມເທັກໂນໂລຊີອຳນວຍຄວາມສະດວກຂອງກຸ່ມທົດລອງມີສັດສ່ວນລະຫວ່າງການຮຽນ ແລະ ຫຼັງການຮຽນຄື 81.83/79.66. 2) ຄະແນນສະເລ່ຍທັກສະການທັກສະການອ່ານສະກົດຄຳ, ອ່ານເປັນປະໂຫຍກ ແລະ ເຂົ້າໃຈໃນການອ່ານຂອງກຸ່ມທົດລອງຫຼັງທົດສອບສູງກວ່າກ່ອນທົດສອບ ຢ່າງມີຄວາມສຳພັນທາງສະຖິຕິທີ່ລະດັບ 0.01 ຄະແນນສະເລ່ຍຂອງກຸ່ມຄວບຄຸມ ແລະ ກຸ່ມທົດລອງບໍ່ແຕກຕ່າງກັນ.

## 3. ວິທີດຳເນີນການຄົ້ນຄວ້າ

ໃນການຄົ້ນຄວ້າຄັ້ງນີ້ ມີຈຸດປະສົງເພື່ອສຶກສາປະສິດທິພາບຂອງບົດສອນ, ສຶກສາປະສິດທິຜົນຂອງການຮຽນຮູ້ ແລະ ຄວາມສາມາດດ້ານການອອກສຽງກ່ຽວກັບການອ່ານພະຍັນຊະນະປະກອບຮູບພາບຂອງເດັກ ຫ້ອງກຽມປະຖົມ ຜ່ານກິດຈະກຳວົງມົນ ທີ່ໂຮງຮຽນປະຖົມຂົວທີ 1 ແຂວງຫຼວງພະບາງ ສົກຮຽນ 2024-2025 ເຊິ່ງຜູ້ຄົ້ນຄວ້າໄດ້ດຳເນີນການສຶກສາຄົ້ນຄວ້າຕາມຂັ້ນຕອນຕ່າງໆ ດັ່ງລາຍລະອຽດຕໍ່ໄປນີ້:

1. ອອກແບບການຄົ້ນຄວ້າ
2. ວິທີດຳເນີນການຄົ້ນຄວ້າ
3. ເຄື່ອງມືທີ່ໃຊ້ເຂົ້າໃນການເກັບກຳຂໍ້ມູນ
4. ການສ້າງເຄື່ອງມື ແລະ ການຊອກຫາຄຸນນະພາບຂອງເຄື່ອງມື
5. ວິທີເກັບຮອບຮວມຂໍ້ມູນ
6. ວິທີວິເຄາະຂໍ້ມູນ ແລະ ສະຖິຕິທີ່ໃຊ້ໃນການເກັບກຳຂໍ້ມູນ

### *3.1 ກຸ່ມເປົ້າໝາຍ*

ກຸ່ມເປົ້າໝາຍທີ່ນຳໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ ເດັກຫ້ອງກຽມປະຖົມ ຈຳນວນ 30 ຄົນ, ຍິງ 18 ຄົນ ທີ່ໂຮງຮຽນປະຖົມສົມບູນຂົວທີ 1 ນະຄອນຫຼວງພະບາງ ແຂວງຫຼວງພະບາງ ພາກຮຽນທີ 2 ສົກຮຽນ 2024-2025. ວິທີເລືອກກຸ່ມຕົວຢ່າງທາງຜູ້ຄົ້ນຄວ້າໄດ້ນຳໃຊ້ວິທີການສຸ່ມຕົວຢ່າງແບບບໍ່ມີຄວາມໜ້າຈະເປັນໄປໄດ້ (Nonprobability sampling) ຄັດເລືອກແບບເຈາະຈົງ (Purposive sampling) ອີງໃສ່ຈຸດປະສົງຂອງການຄົ້ນຄວ້າເປັນຫຼັກ (ກັນຍາສິລິ ຈັນຈະເລີນ, 2554, ໜ້າ. 100).

### *3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ມີຄື:

1) ບົດສອນ 6 ບົດສອນ

2) ແບບທົດສອບ: ແບບທົດສອບກ່ອນຮຽນ, ລະຫວ່າງຮຽນ ແລະ ຫຼັງຮຽນ

3) ເກນການປະເມີນຜົນການອ່ານ

### *3.3 ວິທີເກັບກຳຂໍ້ມູນ*

ການເກັບກຳລວບລວມຂໍ້ມູນທາງຜູ້ຄົ້ນຄວ້າໄດ້ດຳເນີນຕາມຂັ້ນຕອນດັ່ງນີ້:

- ກະກຽມແຜນການຈັດກິດຈະກຳການຮຽນ-ການສອນ ໄປນຳໃຊ້ຕົວຈິງ
- ນຳຂໍ້ສອບຈຳນວນ 20 ຂໍ້ ໄປທົດສອບກ່ອນການຮຽນ ເພື່ອເກັບຂໍ້ມູນໄປປຽບທຽບຜົນການຮຽນ.
- ດຳເນີນການສອນຕາມບົດສອນທີ່ວາງໄວ້ ຜ່ານກິດຈະກຳວົງມົນ ຈຳນວນ 6 ບົດ ຕາມຂັ້ນຕອນການສອນກິດຈະກຳວົງມົນດັ່ງນີ້: ຂັ້ນຈັດກິດຈະກຳ ( ສົນທະນາ, ສັງເກດຮູບພາບ, ອ່ານອອກສຽງຕາມຄູ), ຂັ້ນຝຶກປະຕິບັດ ແລະ ນຳໃຊ້ ( ສັງເກດ, ອ່ານອອກສຽງດ້ວຍຕົນເອງ ລວມເຖິງການຊຸກຍູ້ຕິດຕາມ ແລະ ຊ່ວຍເຫຼືອຈາກຄູ)
- ການດຳເນີນການສອນກິດຈະກຳວົງມົນມີທັງໝົດ 6 ກິດຈະກຳ , ໃຊ້ເວລາສອນ 3 ຊຸ່ວໂມງ ເຊິ່ງປະກອບມີຫົວຂໍ້ຍ່ອຍດັ່ງນີ້:

ຫົວຂໍ້ທີ 1: ການອ່ານພະຍັນຊະນະ ກ-ງ ປະກອບຮູບພາບ (30 ນາທີ) ວັນທີສອນ 17/2/2025

ຫົວຂໍ້ທີ 2: ການອ່ານພະຍັນຊະນະ ຈ-ຍ ປະກອບຮູບພາບ (30 ນາທີ) ວັນທີສອນ 20/2/2025

ຫົວຂໍ້ທີ 3: ການອ່ານພະຍັນຊະນະ ດ-ທ ປະກອບຮູບພາບ (30 ນາທີ) ວັນທີສອນ 24/2/2025

ຫົວຂໍ້ທີ 4: ການອ່ານພະຍັນຊະນະ ນ-ຝ ປະກອບຮູບພາບ (30 ນາທີ) ວັນທີສອນ 27/2/2025

ຫົວຂໍ້ທີ 5: ການອ່ານພະຍັນຊະນະ ພ-ລ ປະກອບຮູບພາບ (30 ນາທີ) ວັນທີສອນ 3/3/2025

ຫົວຂໍ້ທີ 6: ການອ່ານພະຍັນຊະນະ ວ-ຮ ປະກອບຮູບພາບ (30 ນາທີ) ວັນທີສອນ 6/3/2025

ເຊິ່ງລະຫວ່າງການດຳເນີນການສອນແຕ່ລະບົດຄູຈະມີການປະເມີນການອ່ານຂອງເດັກແຕ່ລະຄົນໄປພ້ອມ ພາຍຫຼັງສິ້ນສຸດການສອນແຕ່ລະຄັ້ງຈະມີການທົດສອບເດັກດ້ວຍການຍາຍບົດທົດສອບ ຈຳນວນ 10 ຂໍ້ໃຫ້ນັກຮຽນທົດສອບ. ເມື່ອດຳເນີນການສອນທັງໝົດ 6 ບົດສິ້ນສຸດລົງ ຄູໄດ້ເອົາບົດທົດສອບຈຳນວນ 20 ຂໍ້ ຊຸດດຽວກັນກັບການທົດສອບກ່ອນການຮຽນມາທົດສອບອີກຄັ້ງຫຼັງການຮຽນ ກວດໃຫ້ຄະແນນ ເພື່ອນຳໄປວິເຄາະຂໍ້ມູນ.

*3.4 ການວິເຄາະຂໍ້ມູນ ສະຖິຕິທີ່ໃຊ້ໃນການຄົ້ນຄວ້າ*

1) ວິເຄາະຊອກຫາປະສິດທິພາບຂອງການສອນກ່ຽວກັບການອ່ານພະຍັນຊະນະປະກອບຮູບພາບ ໂດຍໃຊ້ກິດຈະກຳວົງມົນ ຂອງເດັກຫ້ອງກຽມປະຖົມ ຕາມເກນ 80/80 ໂດຍນຳໃຊ້ສູດ ($E_1/E_2$).

2) ວິເຄາະຊອກຫາປະສິດທິຜົນຂອງການຈັດການຮຽນການສອນກ່ຽວກັບການອ່ານພະຍັນຊະນະປະກອບຮູບພາບ ໂດຍນຳໃຊ້ກິດຈະກຳວົງມົນ ຂອງເດັກຫ້ອງກຽມປະຖົມ ວິເຄາະຈາກຄະແນນກ່ອນ ແລະ ຫຼັງຮຽນ ເມື່ອທຽບກັບຄະແນນເຕັມຕາມວິທີຂອງ (Goodman), (Fletchers), (Schneider).

3) ການວິເຄາະຜົນການຮຽນຂອງເດັກ

ການວິເຄາະຂໍ້ມູນຈາກແບບທົດສອບເດັກແມ່ນນຳເອົາຄະແນນແຕ່ລະຕົວຂອງເດັກມາຈັດລຽງແຕ່ໜ້ອຍຫາຫຼາຍຊອກຫາຄະແນນສະເລ່ຍ ($\overline{X}$) ແລະ ຄ່າຜັນປ່ຽນມາດຕາຖານ (S.D) ແລ້ວນຳມາສົມທຽບກັບເກນທີ່ຕັ້ງໄວ້ດັ່ງນີ້:

- ເກນແປຜົນຄະແນນຈາກແບບທົດສອບເດັກ

ຄ່າຄະແນນສະເລ່ຍລະຫວ່າງ 9,00-10,00 ໝາຍເຖິງ ເກັ່ງຫຼາຍ

ຄ່າຄະແນນສະເລ່ຍລະຫວ່າງ 7,00-8,99 ໝາຍເຖິງ ເກັ່ງ

ຄ່າຄະແນນສະເລ່ຍລະຫວ່າງ 5,00-6,99 ໝາຍເຖິງ ປານກາງ

ຄ່າຄະແນນສະເລ່ຍລະຫວ່າງ 3,00-4,99 ໝາຍເຖິງ ອ່ອນ

ຄ່າຄະແນນສະເລ່ຍລະຫວ່າງ 0,00-2,99 ໝາຍເຖິງ ອ່ອນຫຼາຍ

4). ການວິເຄາະຫາຄ່າສະເລ່ຍ ທັກສະດ້ານການອ່ານພະຍັນຊະນະປະກອບຮູບພາບ

ການວິເຄາະຂໍ້ມູນທີ່ໄດ້ມາຈາກການສັງເກດພຶດຕິກຳທັກສະການຄິດຂອງເດັກ ແມ່ນນຳແບບສັງເກດເດັກທຸກສະບັບຈາກການສັງເກດແຕ່ລະຄັ້ງມາກວດຄວາມຖືກຕ້ອງ, ແລ້ວມາຄິດຫາຄ່າສະເລ່ຍ ($\bar{x}$) ລະ ຄ່າຜັນປ່ຽນມາດຖານ (S.D) ແລ້ວນຳມາທຽບກັບເກນທີ່ຕັ້ງໄວ້ດັ່ງນີ້:

\+ ເກນການແປຜົນສຳລັບການປະເມີນພຶດຕິກຳການຮຽນຮູ້ຂອງເດັກທີ່ຄິດໄລ່ເປັນເປີເຊັນສ່ວນຮ້ອຍ

- ຄະແນນສະເລ່ຍລະຫວ່າງ 2.50-3.00 ໝາຍເຖິງ ດີ
- ຄະແນນສະເລ່ຍລະຫວ່າງ 1.50 – 2.49 ໝາຍເຖິງ ປານກາງ
- ຄະແນນສະເລ່ຍລະຫວ່າງ 1.00 – 1.49 ໝາຍເຖິງ ປັບປຸງ

5).ວິເຄາະ ຊອກຫາຄຸນນະພາບຂອງເຄື່ອງມື

ການວິເຄາະຊອກຫາຄຸນນະພາບຂອງເຄື່ອງມືແມ່ນໄດ້ນຳເອົາຂໍ້ມູນທີ່ລວບລວມໄດ້ ຈາກຄວາມຄິດ ເຫັນ ຂອງຜູ້ຊ່ຽວຊານມາຄຳນວນຫາຄ່າດັດສະນີຄວາມສອດຄ່ອງ (IOC)ໂດຍໃຊ້ດັດສະນີຄວາມສອດຄ່ອງ (Index of Item Objective Congruence) ເຊິ່ງມີຄ່າເທົ່າກັບ 0.5 ຂຶ້ນໄປຖືວ່າມີຄວາມສອດຄ່ອງຢູ່ໃນເກນທີ່ຍອມຮັບໄດ້ ໂດຍກຳນົດເກນການພິຈາລະນາດັ່ງນີ້:

+1 ໝາຍເຖິງ ເຫັນວ່າມີຄວາມສອດຄ່ອງເໝາະສົມ

0 ໝາຍເຖິງ ບໍ່ແນ່ໃຈວ່າມີຄວາມສອດຄ່ອງ

-1 ໝາຍເຖິງ ເຫັນວ່າບໍ່ມີຄວາມສອດຄ່ອງ

*3.5. ສະຖິຕິທີ່ໃຊ້ໃນການຄົ້ນຄວ້າ*

1) ຄ່າສະເລ່ຍໂດຍບໍ່ໄດ້ຈັດຄວາມຖີ່

ສູດຄິດໄລ່ $\overline{X} = \frac{\Sigma X}{N}$ ຫຼື

$$\overline{X} = \frac{x_1 + x_2 + x_3 + \ldots + x_i}{N}$$

$\bar{X}$ ແມ່ນ ຄ່າສະເລ່ຍ

$\Sigma X$ ແມ່ນ ຜົນລວມຂອງຄະແນນທັງໝົດ

$x$ ແມ່ນ ຄະແນນແຕ່ລະຕົວ

N ແມ່ນ ຈຳນວນຄະແນນທັງໝົດ

2) ຄ່າຜັນປ່ຽນມາດຖານ

ຄ່າ $S.D = \sqrt{\frac{\sum\left(X - \overline{X}\right)^2}{n-1}}$

S.D ແມ່ນ ຄ່າຜັນປ່ຽນມາດຖານ

X ແມ່ນ ຄະແນນ.

$\bar{X}$ ແມ່ນ ຄ່າສະເລ່ຍ.

n ແມ່ນປະຊາກອນທັງໝົດທີ່ນຳມາເປັນກຸ່ມຕົວຢ່າງ.

(ສົມພົງ ພັນທຸລັກ, 2550, ໜ້າ. 44)

3) ການຊອກຫາເປີເຊັນ

$P = \frac{F}{N} \times 100\%$

P ເປີເຊັນ

F ແມ່ນຈຳນວນທີ່ໄດ້ມາ

N ຈຳນວນຂໍ້ມູນທັງໝົດ

(ສົມລວຍ ສຸຕິຍະໄທ, 2011, ໜ້າ. 46)

4) ສະຖິຕິທີ່ໃຊ້ໃນການທົດສອບສົມມຸດຖານ

ຊອກຫາປະສິດທິພາບຂອງການສອນ ໂດຍໃຊ້ສູດ $E_1/E_2$ ດັ່ງນີ້ (ຊະອະລິດ ຊູກຳແພງ, 2553, ໜ້າ. 121-123).

$$E_1 = \frac{\frac{\sum X}{N}}{A} \times 100$$

ເມື່ອ E₁ ແທນ ປະສິດທິພາບຂອງຂະບວນການ

$\sum X$ ແທນຜົນບວກຄະແນນແຕ່ລະອັນ

A ແທນຄະແນນເຕັມທັງໝົດ

N ແທນ ຈຳນວນນັກຮຽນທັງໝົດ

$$E_2 = \frac{\frac{\sum Y}{N}}{B} \times 100$$

ເມື່ອ $E_2$ ແທນ ປະສິດທິພາບຂອງຜົນລັບ

$\sum Y$ ແທນຜົນບວກຂອງຄະແນນຈາກແບບທົດສອບຫຼັງຮຽນ

B ແທນຄະແນນເຕັມຂອງແບບທົດສອບຫຼັງຮຽນ

N ແທນຈຳນວນນັກຮຽນທັງໝົດ

5) ການຊອກຫາຄ່າປະສິດທິຜົນ ( The Effcetiveness Index: E.I) ໂດຍໃຊ້ວິທີການຂອງ(Goodman), (Fletchers) ແລະ (Schneider).ດັ່ງນີ້ (ບຸນຊົມ ສີສະອາດ, 2552, ໜ້າ. 117).

$$\text{E.I} = \frac{\text{ຜົນລວມຄະແນນທົດສອບຫຼັງຮຽນທຸກຄົນ} - \text{ຜົນລວມຄະແນນທົດສອບກ່ອນຮຽນທຸກຄົນ}}{(\text{ຈຳນວນນັກຮຽນ} \times \text{ຄະແນນເຕັມ}) - \text{ຜົນລວມຄະແນນທົດສອບກ່ອນຮຽນທຸກຄົນ}}$$

## 4. ຜົນການຄົ້ນຄວ້າ

ປະສິດທິພາບການສອນເດັກຫ້ອງກຽມປະຖົມ ແລະ ຄວາມສາມາດອ່ານ ພະຍັນຊະນະປະກອບຮູບພາບ ຜ່ານກິດຈະກຳວົງມົນ ຢູ່ໂຮງຮຽນປະຖົມສົມບູນ ຂ໊ອທີ 1, ແຂວງ ຫຼວງພະບາງ ໃນຄັ້ງນີ້ມີຜົນໄດ້ຮັບດັ່ງນີ້:

*1.1 ຂໍ້ມູນສ່ວນຕົວຂອງກຸ່ມຕົວຢ່າງ*

ຫ້ອງກຽມປະຖົມເປັນຫ້ອງຮຽນທີ່ ຮັບເດັກອາຍຸ 5-6 ປີມາກຽມຄວາມພ້ອມໄປຮຽນໃນຊັ້ນປະຖົມປີທີ 1 ຫ້ອງຮຽນຕິດແປະກັບໂຮງຮຽນປະຖົມ ນັກຮຽນທີ່ເຂົ້າມາຮຽນສ່ວນຫຼາຍແມ່ນມາຈາກບ້ານຂ໊ອທີ່ໜຶ່ງ ມີນັກຮຽນທັງໝົດ 30 ຄົນ, ຍິງ 18 ຄົນ ໃນການຄົ້ນຄວ້າຄັ້ງນີ້ແມ່ນເອົານັກຮຽນທັງໝົດມາເປັນກຸ່ມຕົວຢ່າງເຊິ່ງສະແດງອອກດັ່ງນີ້:

ຕາຕະລາງທີ 1 ຜົນການວິເຄາະຫາຄ່າປະສິດທິພາບຂອງການສອນ ($E_1/E_2$)

| ຄະແນນ | ຄະແນນເຕັມ | $\overline{X}$ | S.D | $E_1/E_2$ |
|---|---|---|---|---|
| ປະສິດທິພາບຂອງຂະບວນການ ($E_1$) | 30 | 84.22 | 2.43 | 84.22 /86.16 |
| ປະສິດທິພາບຂອງຜົນສຳເລັດ ($E_2$) | 30 | 86.16 | 1.19 | |
| ປະສິດທິພາບຂອງບົດສອນເທົ່າກັບ 84.22/86.16 | | | | |

ຈາກຕາຕະລາງທີ 1 ພົບວ່າ ປະສິດທິພາບຂອງຂະບວນການ ($E_1$) ເທົ່າກັບ 84.22 ແລະ ປະສິດທິພາບຂອງຜົນສຳເລັດ ($E_2$) ເທົ່າກັບ 86.16. ດັ່ງນັ້ນ, ການສົ່ງເສີມທັກສະການອ່ານພະຍັນຊະນະປະກອບຮູບພາບ ໂດຍນຳໃຊ້ກິດຈະກຳວົງມົນ ຂອງເດັກຫ້ອງກຽມປະຖົມ ທີ່ໂຮງຮຽນປະຖົມສົມບູນຂ໊ອທີ 1 ພາກຮຽນທີ 2 ສົກຮຽນ 2024-2025 ແມ່ນມີປະສິດທິພາບເທົ່າກັບ 84.22/86.16 ເຊິ່ງສູງກວ່າເກນ 80/80 ທີ່ກຳນົດໄວ້.

ຕາຕະລາງທີ 2 ຜົນການວິເຄາະຫາປະສິດທິຜົນການຮຽນຮູ້

| ຈຳນວນນັກຮຽນ | ຄະແນນເຕັມ | ຜົນລວມຄະແນນ | | ດັດສະນີປະສິດທິຜົນ (E.I) |
|---|---|---|---|---|
| | | ທົດສອບກ່ອນຮຽນ | ທົດສອບຫຼັງຮຽນ | |
| 30 | 20 | 321 | 517 | 0.7025 |

ຈາກຕາຕະລາງ 2 ພົບວ່າ: ຜົນການວິເຄາະຄ່າປະສິດທິຜົນຄວາມກ້າວໜ້າທາງດ້ານພັດທະນາການຮຽນຮູ້ຂອງເດັກ (E.I) ໂດຍໃຊ້ກິດຈະກຳວົງມົນເຂົ້າໃນການຈັດການຮຽນການສອນ ການອ່ານພະຍັນຊະນະປະກອບຮູບພາບ ທີ່ໂຮງຮຽນປະຖົມສົມບູນຂ໊ອທີໜຶ່ງ ມີຄ່າເທົ່າກັບ 0.7025 ເຊິ່ງໝາຍຄວາມວ່າເດັກ ມີຄວາມຮູ້ເພີ່ມຂຶ້ນ 0.7025 ຫຼື ຄິດໄລ່ເປັນສ່ວນຮ້ອຍເທົ່າກັບ 70.25%

ຜົນການສັງເກດທັກສະການອ່ານພະຍັນຊະນະປະກອບຮູບພາບ ໃນ 6 ຄັ້ງ




ຮູບທີ 1: ທັກສະການອ່ານພະຍັນຊະນະປະກອບຮູບພາບ

ສະແດງເຖິງຜົນການວິເຄາະຄ່າຄະແນນຂອງຜົນການສັງເກດການຮຽນ ສົ່ງເສີມທັກສະການອ່ານພະຍັນຊະນະປະກອບຮູບພາບ ໃນ 6 ຄັ້ງ ເປັນການເກັບຄະແນນຈາກກຸ່ມຕົວຢ່າງຈຳນວນ 30 ຄົນ, ຫ້ອງກຽມປະຖົມ ສາມາດເຫັນໄດ້ຊັດເຈນວ່າ ເດັກມີຄະແນນຈາກຜົນການປະຕິບັດກິດຈະກຳ ໂດຍລວມທັງໝົດ 6 ຄັ້ງ ມີຄ່າ $\overline{X}$= 2.04 ເຊິ່ງຢູ່ໃນລະດັບປານກາງ ແລະ ເປີເຊັນສ່ວນຮ້ອຍແມ່ນ 68.14 ເຊິ່ງເມື່ອເຮົາມາເບິ່ງເປັນແຕ່ລະຄັ້ງແລ້ວເຫັນວ່າ ມີທ່າອ່ຽງເພີ່ມຂຶ້ນຕາມລຳດັບ ຄັ້ງທີ 1 ມີຄ່າ $\overline{X}$=1.60 ເຊິ່ງຢູ່ໃນລະດັບປານກາງ ແລະ ເປີເຊັນສ່ວນຮ້ອຍແມ່ນ 53.33; ຄັ້ງທີ 2 ມີຄ່າ $\overline{X}$= 1.63 ເຊິ່ງຢູ່ໃນລະດັບປານກາງ ແລະ ເປີເຊັນສ່ວນຮ້ອຍແມ່ນ 54.44; ຄັ້ງທີ 3 ມີຄ່າ $\overline{X}$= 1.83 ເຊິ່ງຢູ່ໃນລະດັບປານກາງ ແລະ ເປີເຊັນສ່ວນຮ້ອຍແມ່ນ 61.10; ຄັ້ງທີ 4 ມີຄ່າ $\overline{X}$= 2.03 ເຊິ່ງຢູ່ໃນລະດັບປານກາງ ແລະ ເປີເຊັນສ່ວນຮ້ອຍແມ່ນ 67.77; ຄັ້ງທີ 5 ມີຄ່າ $\overline{X}$= 2.53 ເຊິ່ງຢູ່ໃນລະດັບດີ ແລະ ເປີເຊັນສ່ວນຮ້ອຍແມ່ນ 84.44; ຄັ້ງທີ 6 ມີຄ່າ $\overline{X}$= 2.63 ເຊິ່ງຢູ່ໃນລະດັບດີ ແລະ ເປີເຊັນສ່ວນຮ້ອຍແມ່ນ 87.77.

## 5. ອະພິປາຍຜົນ

ການຄົ້ນຄວ້າກ່ຽວກັບການສົ່ງເສີມທັກສະການອ່ານພະຍັນຊະນະປະກອບຮູບພາບ ໂດຍໃຊ້ກິດຈະກຳວົງມົນ ຂອງເດັກຫ້ອງກຽມປະຖົມ ມີຜົນການຄົ້ນຄວ້າມາອະພິປາຍຜົນໄດ້ດັ່ງນີ້:

1) ປະສິດທິພາບ $E_1/E_2$ ຂອງການສອນທີ່ນຳໃຊ້ກິດຈະກຳວົງມົນ ເຂົ້າໃນການຮຽນການສອນກ່ຽວກັບການອ່ານພະຍັນຊະນະປະກອບຮູບພາບ ຂອງເດັກຫ້ອງກຽມປະຖົມຜູ້ຄົ້ນຄວ້າສ້າງຂຶ້ນ ນັກຮຽນໄດ້ຄະແນນສະເລ່ຍຈາກການທົດສອບຍ່ອຍ ຈຳນວນ 6 ບົດສອນມີຄະແນນຂະບວນການ ($E_1$) ໂດຍສະເພາະແມ່ນ 84.22 ແລະ ຄະແນນຈາກການທົດສອບຫຼັງຮຽນ ($E_2$) 86.16 ສະແດງໃຫ້ເຫັນວ່າບົດສອນທີ່ໃຊ້ກິດຈະກຳວົງມົນເຂົ້າໃນການຈັດການຮຽນການສອນກ່ຽວກັບການອ່ານພະຍັນຊະນະປະກອບຮູບພາບ ຫ້ອງກຽມປະຖົມ ມີປະສິດທິພາບ $E_1/E_2$ ເທົ່າກັບ 84.22/86.16 ເປັນໄປຕາມເກນທີ່ກຳນົດຄື 80/80 ເຊິ່ງສອດຄ່ອງກັບ (ຄຳປັນ ບຸນເລີດ, 2553) ໄດ້ຄົ້ນຄວ້າຫົວຂໍ້ ການໃຊ້ເຕັກໂນໂລຢີອຳນວຍຄວາມສະດວກເພື່ອພັດທະນາທັກສະການອ່ານຂອງນັກຮຽນທີ່ມີບັນຫາທາງການຮຽນ ຜົນການຄົ້ນຄວ້າພົບວ່າ: 1) ປະສິດທິພາບຂອງການໃຊ້ໂປຼແກມເທັກໂນໂລຊີອຳນວຍຄວາມສະດວກຂອງກຸ່ມທົດລອງມີສັດສ່ວນລະຫວ່າງການຮຽນ ແລະ ຫຼັງການຮຽນຄື 81.83/79.66 ສູງກວ່າເກນທີ່ກຳນົດໄວ້ 80/80 (ສຸວັນນີ ຍະຫະກອນ, 2555) ຜົນການໃຊ້ໜັງສືເອເລັກໂທນິກເລື່ອງການອ່ານຄຳທີ່ມີວັນນະຍຸດ ທີ່ມີຕໍ່ຜົນສຳເລັດທາງການຮຽນວິຊາພາສາໄທ ຂອງນັກຮຽນຊັ້ນປະຖົມສຶກສາປີທີ 1 ໂຮງຮຽນນິຄົມສ້າງຕົນເອງ ຈັ່ງຫວັດລະຍອງ 6 ຜົນການຄົ້ນຄວ້າພົບວ່າ: 1) ໜັງສືເອເລັກໂທນິກດ້ານການອ່ານຄຳມີວັນນະຍຸດຂອງນັກຮຽນ ມີປະສິດທິພາບ 83.85/83.30 ເຊິ່ງສູງກວ່າເກນທີ່ກຳນົດ ຜົນທັງໝົດທີ່ກ່າວມາຂ້າງເທິງນັ້ນ ເນື່ອງຈາກບົດສອນທີ່ນຳໃຊ້ກິດຈະກຳວົງມົນ ການອ່ານພະຍັນຊະນະປະກອບຮູບພາບ ຂອງເດັກຫ້ອງກຽມປະຖົມ ໄດ້ຜ່ານຂະບວນການສ້າງ, ວິເຄາະ, ປັບປຸງຢ່າງເປັນລະບົບ ກ່ອນລົງມືສ້າງຜູ້ຄົ້ນຄວ້າໄດ້ສຶກສາຫຼັກສູດ, ທິດສະດີຫຼັກການ, ຄູ່ມືຄູ ແລະ ເອກະສານທີ່ກ່ຽວຂ້ອງກັບການສ້າງບົດສອນ, ຂັ້ນຕອນການສອນກິດຈະກຳວົງມົນ ຈາກນັ້ນ, ກໍໄດ້ນຳເອົາຄວາມຮູ້ດັ່ງກ່າວມາໃຊ້ໃນການວິເຄາະຫຼັກສູດ, ກຳນົດຈຸດປະສົງເປົ້າໝາຍໃນການຮຽນການສອນ, ກຳນົດການຮຽນການສອນຕາມຂັ້ນຕອນການສອນຂອງກິດຈະກຳວົງມົນ ແລະ ກຳນົດການວັດ ແລະ ປະເມີນຜົນ. ນອກຈາກນັ້ນບົດສອນກໍໄດ້ກຳນົດການກວດສອບ ແລະ ປະເມີນຄວາມເໝາະສົມຈາກຜູ້ຊ່ຽວຊານແລ້ວຜູ້ຄົ້ນຄວ້າກໍໄດ້ນຳໄປປັບປຸງແກ້ໄຂຕາມຄຳແນະນຳຢ່າງຄົບຖ້ວນ ເພື່ອເຮັດໃຫ້ບົດສອນມີປະສິດທິພາບ ແລະ ສາມາດສົ່ງເສີມໃຫ້ຜູ້ຮຽນໄດ້ຄົ້ນຄິດ ຈາກນັ້ນ, ຜູ້ຄົນຄວ້າໄດ້ນຳໄປເກັບກຳຂໍ້ມູນ.

2) ປະສິດທິຜົນ (E.I) ຂອງການສອນທີ່ນຳໃຊ້ກິດຈະກຳວົງມົນ ການອ່ານພະຍັນຊະນະປະກອບຮູບພາບ ເຂົ້າໃນການຈັດການຮຽນການສອນ ຫ້ອງກຽມປະຖົມ ມີຄ່າເທົ່າກັບ 0.7025 ຄິດເປັນເປີເຊັນ 70.25% ອາດເນື່ອງຈາກການຈັດກິດຈະກຳການຮຽນການສອນໃຊ້ກິດຈະກຳວົງມົນ ເປັນການຈັດກິດຈະກຳການຮຽນການສອນທີ່ສົ່ງເສີມໃຫ້ນັກຮຽນໄດ້ຄົ້ນຄິດ, ເຮັດກິດຈະກຳຮ່ວມກັນ ເກີດຄວາມສະນຸກສະໜານ ແລະ ມີຄວາມກະຕືລືລົ້ນໃນການຮຽນຮູ້ຈຶ່ງເຮັດໃຫ້ປະສິດຜົນຂອງການຮຽນຮູ້ຂອງນັກຮຽນສູງກວ່າເກນທີ່ກຳນົດໄວ້ ເຊິ່ງສອດຄ່ອງກັບ (ຈາລິຍາ ສຸກແກ້ວ, 2565) ໄດ້ສຶກສາກ່ຽວກັບ ການພັດທະນາຄວາມສາມາດການອ່ານຄຳສັບໂດຍໃຊ້ກິດຈະກຳການຮຽນຮູ້ຕາມແນວຄິດສະໝອງເປັນພື້ນຖານຮ່ວມກັບການໃຊ້ແບບຝຶກທັກສະສຳລັບນັກຮຽນຊັ້ນປະຖົມສຶກສາປີທີ 1 ຜົນການທົດສອບຄວາມສາມາດອ່ານຄຳກ່ອນ ແລະ ຫຼັງການຈັດກິດຈະກຳການຮຽນຮູ້ຕາມແນວຄິດສະໝອງເປັນຖານ ລວມການໃຊ້ແບບຝຶກທັກສະພົບວ່າຄະແນນສະເລ່ຍຫຼັງຮຽນສູງກວ່າກ່ອນຮຽນ ມີຄວາມສຳພັນທາງສະຖິຕິ .05, ສອດຄ່ອງກັບ ກັນກຣັດ ວົງຍະລາ (2565) ໄດ້ຄົ້ນຄວ້າ ການພັດທະນາກິດຈະກຳການອ່ານ ໂດຍໃຊ້ສື່ວັນນະກຳທ້ອງຖິ່ນ ຕາມແນວການອ່ານເສີມຕໍ່ການຮຽນຮູ້ ເພື່ອເສີມສ້າງຄວາມສາມາດໃນການອ່ານພາສາໄທຄຳທີ່ສະກົດບໍ່ຕົງມາດຕາຂອງນັກຮຽນຂັ້ນ

ປະຖົມສຶກສາປີທີ 2 ຜົນການຄົ້ນຄວ້າພົບວ່າ: ຄ່າດັດສະນີປະສິດທິຜົນກິດຈະກຳການອ່ານເທົ່າກັບ 0.57 ສູງກວ່າເກນທີ່ກຳນົດໄວ້. ພັນທອງ, ສຸຂະວິໄຊ, ແສນບຸນເຊືອນ, ວັນນະພາ ແລະ ຄຸນສະຫວັດ (2024) ພົບວ່າ ການພັດທະນາທັກສະການອ່ານຄຳສັບ ໂດຍນຳໃຊ້ມຸມອ່ານ ຂັ້ນອະນຸບານ 2 ທີ່ໂຮງຮຽນອະນຸບານສາທິດ ຂອງວິທະຍາໄລຄູຫຼວງພະບາງ ຜົນການຄົ້ນຄວ້າພົບວ່າ ທັກສະດ້ານການອ່ານອອກສຽງຄຳສັບ ຂອງເດັກຂັ້ນອະນຸບານ 2 ໂດຍການຈັດການຮຽນຮູ້ໂດຍການຈັດກິດຈະກຳໃນມູມອ່ານ ມີຜົນສຳເລັດທາງການຮຽນຫຼັງການຮຽນສູງ ກວ່າກ່ອນຮຽນ ໂດຍມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05.

3) ຜົນການຄົ້ນຄວ້າຄັ້ງນີ້ ເຮັດໃຫ້ຮູ້ວ່າ ສົ່ງເສີມທັກສະການອ່ານພະຍັນຊະນະປະກອບຮູບພາບຂອງເດັກ ໂດຍນຳໃຊ້ກິດຈະກຳວົງມົນ ຂອງເດັກຫ້ອງກຽມປະຖົມ ໂຮງຮຽນປະຖົມສົມບູນຂົວທີ່ 1 ນະຄອນຫຼວງພະບາງ ແຂວງຫຼວງພະບາງ ຈຳນວນ 30 ຄົນ, ຍິງ 18 ຄົນ ໃນປີ 2024 ທີ່ໄດ້ຮັບການຈັດປະສົບການກ່ຽວກັບການອ່ານອອກສຽງພະຍັນຊະນະປະກອບຮູບພາບ ໂດຍໃຊ້ກິດຈະກຳວົງມົນ ຈາກແບບປະເມີນຜົນການຮຽນຂອງເດັກຜ່ານການຈັດການຮຽນ, ການສອນທັງ 6 ຄັ້ງທີ່ໄດ້ໝູນໃຊ້ການຈັດກິດຈະກຳແບບຕ່າງໆໃນວົງມົນ ເຂົ້າໃນການຈັດກິດຈະກຳນັ້ນໄດ້ຊີ້ໃຫ້ເຫັນວ່າຄະແນນສະເລ່ຍ ແລະ ເປີເຊັນໃນຜົນການປະຕິບັດກິດຈະກຳເຫັນວ່າ ພັດທະນາການການອ່ານຄຳສັບຂອງເດັກສູງຂຶ້ນຕາມລຳດັບ: ຄະແນນສະເລ່ຍ 1.60; 1.63; 1.83; 2.03; 2.53 ແລະ 2.63 ເປີເຊັນສ່ວນຮ້ອຍເທົ່າ 53.33; 54.44; 61.10; 67.77; 84.44; 87.77 ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ນັ້ນຄື ຄວາມສາມາດໃນການອ່ານອອກສຽງພະຍັນຊະນະປະກອບຮູບພາບ ໂດຍໃຊ້ກິດຈະກຳວົງມົນ ຂອງເດັກຫ້ອງກຽມປະຖົມ ຈະມີຄ່າສະເລ່ຍຢູ່ໃນລະດັບ ດີ ຂຶ້ນໄປ ແຕ່ທີ່ສະແດງໃຫ້ເຫັນວ່າ ການຈັດກິຈະກຳການອ່ານໃນວົງມົນ ສົ່ງຜົນຕໍ່ທັກສະທາງພາສາລາວ ໂດຍສະເພາະແມ່ນການເວົ້າອອກສຽງຂອງເດັກໃນໄວນີ້ໄດ້ເປັນຢ່າງດີ ເພາະຜົນການສັງເກດ ແລະ ປະເມີນການຮຽນຮູ້ຂອງເດັກໃນຄັ້ງທີ 6 ສາມາດບັນລຸຕາມຄາດໝາຍ. ດັ່ງທີ່ກ່າວມານັ້ນ, ແຕ່ຍັງປາກົດໃຫ້ເຫັນວ່າມີເດັກຈຳນວນໜຶ່ງທີ່ໄດ້ຄະແນນຕ່ຳກວ່າໝູ່ເຊິ່ງ ບັນຫາທີ່ອ່ອນຂອງເດັກນີ້ແມ່ນ ການເຂົ້າໃຈຄວາມໝາຍຂອງຮູບພາບ ແລະ ການອອກສຽງພະຍັນຊະນະປະກອບໃສ່ຮູບພາບບາງໂຕຍັງບໍ່ຖືກຕ້ອງຊັດເຈນປານໃດ. ແຕ່ເຖິງຢ່າງໃດກໍຕາມເດັກກໍມີພັດທະນາການດີຂຶ້ນເລື້ອຍຕາມຄະແນນໃນແຕ່ລະຄັ້ງ. ແຕ່ດ້ວຍເຫດໃດກໍຕາມຜົນການຄົ້ນຄວ້າກໍໄດ້ຊີ້ໃຫ້ເຫັນຢ່າງຊັດເຈນແລ້ວວ່າ: ຜົນຂອງການຈັດກິດຈະກຳການສົ່ງເສີມທັກສະການອ່ານຄຳສັບ ໂດຍນຳໃຊ້ກິດຈະກຳວົງ ຫ້ອງກຽມປະຖົມ ທີ່ໂຮງຮຽນປະຖົມສົມບູນຂົວທີ 1. ເປັນໜ້າສົນໃຈ ແລະ ດີຂຶ້ນ. ການຈັດກິດຈະກຳວົງມົນ ເປັນການຊ່ວຍສົ່ງເສີມທັກສະທາງພາສາລາວ ໂດຍສະເພາະແມ່ນການເວົ້າ, ການອ່ານອອກສຽງພະຍັນຊະນະປະກອບຮູບພາບຂອງເດັກໄດ້ເປັນຢ່າງດີ ແລະ ມີທ່າອ່ຽງກ້າວໜ້າຂຶ້ນຕາມລຳດັບເຊິ່ງເວົ້າໄດ້ວ່າ ສາມາດແກ້ບັນຫາເປົ້າໝາຍໄດ້ 87.77% ຫຼັງຈາກການສອນຄັ້ງທີ 6. ເຊິ່ງສອດຄ່ອງກັບບົດວິໄຈ (ເພັດສະໝອນ ສຸຂະວິໄຊ, 2021) ພ້ອມດ້ວຍຄະນະ ທີ່ວິໄຈໃນຫົວຂໍ້ ກ່ຽວກັບສຶກສາການຈັດການຮຽນ-ການສອນ ກິດຈະກຳວົງມົນ ທັກສະການເວົ້າອອກສຽງຄຳສັບ ແລະ ປະໂຫຍກສັ້ນ ຕາມຮູບພາບ ຂອງເດັກຂັ້ນອະນຸບານ 2 ທີ່ໂຮງຮຽນອະນຸບານສາທິດວິທະຍາໄລຄູຫຼວງພະບາງ ຜົນວິໄຈພົບວ່າ ໃນການຮຽນພາສາລາວສັງເກດແອບເວົ້າ ທັກສະການເວົ້າອອກສຽງຄຳສັບ ແລະ ປະໂຫຍກສັ້ນ ຕາມຮູບພາບ ຂອງເດັກຂັ້ນອະນຸບານ 2 ດີຂຶ້ນແບບຕໍ່ເນື່ອງໃນໄລຍະ 6 ອາທິດຕາມລຳດັບຂອງເປີເຊັນສ່ວນຮ້ອຍຄື: 46.98; 49.84; 54.60; 61.59; 71.75 ແລະ 87.62 ແລະ ສອດຄ່ອງກັບ ພັນທອງ ພ້ອມຄະນະ (2024) ທີ່ພົບວ່າ ການພັດທະນາທັກສະການອ່ານຄຳສັບ ໂດຍນຳໃຊ້ມູມອ່ານ ຂັ້ນອະນຸບານ 2 ທີ່ໂຮງຮຽນອະນຸບານສາທິດຂອງວິທະຍາໄລຄູຫຼວງພະບາງ ຜົນກາວິໄຈພົບວ່າ ເດັກຂັ້ນອະນຸບານ 2 ເດັກແມ່ນມີພັດທະນາການການອອກສຽງຄຳສັບດີຂຶ້ນແບບຕໍ່ເນື່ອງໃນໄລຍະ 3 ອາທິດຕາມລຳດັບຂອງຄະແນນສະເລ່ຍ ແລະ ເປີເຊັນສ່ວນຮ້ອຍຄື: ຄະແນນສະເລ່ຍ 1.75; 1.78; 1.93; 1.94; 2.16 ແລະ ເປີເຊັນສ່ວນຮ້ອຍເທົ່າ 58.33; 59.29; 64.42; 64.74; 72.12.. ດັ່ງນັ້ນ, ໃນການສົ່ງເສີມທັກສະການອ່ານ ແລະ ການຈື່ຈຳຂອງເດັກນັ້ນ ຄວນໃສ່ໃຈໃນເລື່ອງວິທີການ ແລະ ຂັ້ນຕອນການສອນຢ່າງມີຮູບແບບ ເພື່ອໃຫ້ເດັກນັ້ນເກີດການຮັບຮູ້ທີ່ດີ ແລະ ຈະເປັນການປູກຝັງໃຫ້ເດັກມັກ ແລະ ຮັກການອ່ານຄວບຄູ່ໄປກັບພັດທະນາການດ້ານອື່ນຈະດີຂຶ້ນດ້ວຍ, ເຊິ່ງຈາກຕົວເລກໃນການຄົ້ນຄວ້າເຫັນໄດ້ຊັດເຈນວ່າ ການນຳໃຊ້ທິດສະດີມີຄວາມສອດຄ່ອງກັບບັນດາທ່ານຕ່າງໆທີ່ໄດ້ກ່າວມານັ້ນ.

### *6.* ສະຫຼຸບຜົນ

ປະສິດທິພາບຂອງການສອນກ່ຽວກັບການອ່ານພະຍັນຊະນະປະກອບຮູບພາບຂອງເດັກ ໂດຍນຳໃຊ້ກິດຈະກຳວົງມົນ ຫ້ອງກຽມປະຖົມ ທີ່ໂຮງຮຽນປະຖົມຂົວທີ 1 ນະຄອນຫຼວງພະບາງ ແຂວງຫຼວງພະບາງ ພາກຮຽນທີ II ສົກຮຽນ 2024-2025. ມີປະສິດທິພາບເທົ່າກັບ 84.22/86.16 ເຊິ່ງສູງກວ່າເກນທີ່ຕັ້ງໄວ້ 80/80. ເຊິ່ງບົ່ງບອກໃຫ້ເຫັນວ່າການຈັດການຮຽນການສອນຜ່ານກິດຈະກຳວົງມົນເປັນການຈັດການຮຽນການສອນທີ່ມີປະສິດທິພາບສູງ.

ປະສິດທິຜົນຂອງການຮຽນຮູ້ກ່ຽວກັບການອ່ານພະຍັນຊະນະປະກອບຮູບພາບຂອງເດັກ ໂດຍນຳໃຊ້ກິດຈະກຳວົງມົນ ຫ້ອງກຽມປະຖົມ ທີ່ໂຮງຮຽນປະຖົມຂົວທີ 1 ນະຄອນຫຼວງພະບາງ ແຂວງຫຼວງພະບາງ ມີຄ່າເທົ່າກັບ0.7025 ເຊິ່ງໝາຍຄວາມວ່ານັກຮຽນມີຄວາມຮູ້ເພີ່ມຂຶ້ນຄິດເປັນເປີເຊັນແມ່ນ 70.25% ເຊິ່ງສູງກວ່າເກນທີ່ຕັ້ງໄວ້. ເຊິ່ງສະທ້ອນໃຫ້ເຫັນ

ວ່າ ການຈັດການຮຽນການສອນໃນຮູບແບບດັ່ງກ່າວຊ່ວຍສົ່ງເສີມຜົນການຮຽນຮູ້ໄດ້ຢ່າງມີຄວາມສຳຄັນ.

ຄວາມສາມາດດ້ານການອອກສຽງກ່ຽວກັບການອ່ານພະຍັນຊະນະປະກອບຮູບພາບຂອງເດັກ ໂດຍນຳໃຊ້ກິດຈະກຳວິງມິນ ຫ້ອງກຽມປະຖົມ ທີ່ໂຮງຮຽນປະຖົມຂົວທີ 1 ນະຄອນຫຼວງພະບາງ ແຂວງຫຼວງພະບາງ ສົກຮຽນ 2024-2025, ແມ່ນເຫັນໄດ້ວ່າ ເດັກແມ່ນມີພັດທະນາການການອອກສຽງພະຍັນຊະນະປະກອບຮູບພາບດີຂຶ້ນແບບຕໍ່ເນື່ອງໃນໄລຍະ 3 ອາທິດຕາມລຳດັບຂອງຄະແນນສະເລ່ຍ ແລະ ເປີເຊັນສ່ວນຮ້ອຍ ຄື: ຄະແນນສະເລ່ຍ 1.60; 1.63; 1.83; 2.03; 2.53 ແລະ 2.63 ເປີເຊັນສ່ວນຮ້ອຍເທົ່າ 53.33; 54.44; 61.10; 67.77; 84.44; 87.77 ເຊິ່ງສະທ້ອນໃຫ້ເຫັນວ່າ ເດັກນັກຮຽນສາມາດຈື່ຄຳສັບ ແລະ ອ່ານອອກສຽງໄດ້ດີຂຶ້ນ. ໂດຍສະຫຼຸບໄດ້ວ່າ ການຈັດກິດຈະກຳການຮຽນການສອນຜ່ານກິດຈະກຳວິງມິນ ແມ່ນສາມາດຊ່ວຍໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ ເດັກນັກຮຽນສາມາດຈື່ພະຍັນຊະນະ ແລະ ອ່ານອອກສຽງໄດ້ດີຂຶ້ນ.

## 7. ຂໍ້ສະເໜີແນະ

### 7.1. ຂໍ້ສະເໜີຕໍ່ຜູ້ທີ່ຈະນຳຜົນການວິໄຈໄປນຳໃຊ້

ໃນການຄົ້ນຄວ້າຄັ້ງນີ້ຜູ້ຄົ້ນຄວ້ານຳສະເໜີສິ່ງທີ່ເປັນປະໂຫຍດຕໍ່ຜູ້ທີ່ຈະນຳຜົນການຄົ້ນຄວ້າໄປປະຍຸກໃຊ້ໃນການຄົ້ນຄວ້າຂອງຕົນເຊັ່ນ:

- ການຈັດກິດຈະກຳວິງມິນຊ່ວຍພັດທະນາທັກສະການອອກສຽງຄຳສັບ ໄດ້ຂະຫຍາຍຕົວຂຶ້ນ
- ເລີ່ມຕົ້ນຮູບພາບທີ່ຢູ່ໃກ້ຕົວ ແລະ ຊີວິດປະຈຳວັນເດັກ ເພື່ອພັດທະນາທັກສະການອ່ານອອກສຽງຕາມຮູບພາບໃຫ້ແກ່ເດັກໄດ້ດີ.
- ເມື່ອສຳເລັດການສອນໃນທຸກຄັ້ງຄູຄວນສົນທະນາຮ່ວມກັບເດັກ ວ່າເດັກຮູ້ສຶກແນວໃດເພື່ອເປັນການເຝິກທັກສະທາງພາສາ ແລະ ການອອກສຽງຄຳສັບຂອງເດັກໃຫ້ຂະຫຍາຍອອກຕື່ມ.
- ການປະເມີນພັດທະນາການເດັກແບບຕໍ່ເນື່ອງມີຜົນດີຕໍ່ພັດທະນາການເດັກ.

### 7.2. ຂໍ້ສະເໜີຕໍ່ຜູ້ທີ່ຈະເຮັດຄົ້ນຄວ້າໃນຕໍ່ໜ້າ

- ຄວນມີການເສີມເລື່ອງການຝຶກເລື່ອງການຮູ້ຄວາມໝາຍຂອງຮູບພາບໃຫ້ເດັກເພີ່ມຕື່ມ ເນື່ອງຈາກເດັກ

ສ່ວນໃຫຍ່ແມ່ນບໍ່ຮູ້ຄວາມໝາຍຂອງຮູບພາບບາງພາບຈຳນວນຫຼາຍ.

- ຄວນຈັດກິດຈະກຳພັດທະນາການຮຽນພະຍັນຊະນະຕາມຮູບພາບ ເພື່ອໃຫ້ເດັກເຂົ້າໃຈງາຍຂຶ້ນ ແລະ ໄດ້ພັດທະນາກ້າມຊີ້ນມືໄປພ້ອມ
- ຄວນໃຊ້ເຄື່ອງການປະເມີນໃນຫຼາຍຮູບແບບເພື່ອໃຫ້ໄດ້ຂໍ້ມູນທີ່ເລິກເຊິ່ງກວ່າເກົ່າ.

## 8. ຂໍ້ຈຳກັດຂອງການຄົ້ນຄ້ວາ

1. ການເກັບຂໍ້ມູນໃຊ້ເວລາສັ້ນ, ບໍ່ອາດວັດຜົນການຮຽນໄລຍະຍາວ ຫຼື ຄວາມເຂົ້າໃຈທີ່ຄົງທົນຂອງນັກນຽນໄດ້

2. ການປ່ຽນແປງຂອງຄະແນນອາດໄດ້ຮັບຜົນກະທົບຈາກປັດໃຈອື່ນ ເຊັ່ນ: ຄວາມຮູ້ເດີມຂອງເດັກ, ສະພາບແວດລ້ອມໃນຫ້ອງຮຽນ, ແຮງຈູງໃຈສ່ວນຕົວຂອງເດັກ

## 9. ເອກະສານອ້າງອີງ

ກະຊວງສຶກສາທິການ ແລະ ກິລາ ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ. (2012). *ປຶ້ມຫຼັກສູດ ຊັ້ນອະນຸບານສຶກສາ.* ນະຄອນຫຼວງວຽງຈັນ: ລັດວິສະຫະກິດໂຮງພິມສຶກສາ.

ກັນກຣັດ ວົງຍະລາ. (2565). *ການພັດທະນາກິດຈະກຳການອ່ານ ໂດຍໃຊ້ສື່ວັນນະກຳທ້ອງຖິ່ນ ຕາມແນວການອ່ານເສີມຕໍ່ການຮຽນຮູ້ ເພື່ອເສີມສ້າງຄວາມສາມາດໃນການອ່ານພາສາໄທຄຳທີ່ສະກົດບໍ່ຕົງມາດຕາຂອງນັກຮຽນຊັ້ນປະຖົມສຶກສາປີທີ 2.* ຄະນະສຶກສາສາດ.

ຄຳປັນ ບຸນເລີດ. (2553). *ການໃຊ້ເຕັກໂນໂລຢີອຳນວຍຄວາມສະດວກເພື່ອພັດທະນາທັກສະການອ່ານຂອງນັກຮຽນທີ່ມີບັນຫາທາງການຮຽນ.* ມະຫາວິທະຍາໄລລາດສະພັດຊຽງໃໝ່.

ຈາລິຍາ ສຸກແກ້ວ. (2565). *ການພັດທະນາຄວາມສາມາດດ້ານການອ່ານໂດຍໃຊ້ກິດຈະກຳວິງມິນການຮຽນຮູ້ຕາມແນວຄິດສະໝອງເປັນພື້ນຖານລວມກັບການໃຊ້ແບບຝຶກທັກສະ ສຳລັບນັກຮຽນຊັ້ນປະຖົມສຶກສາປີທີ 1.* ຄະນະສຶກສາສາດ.

ສົມຊາຍ ລັດຕະນະທອງຄຳ. (2558). *ເອກະສານປະກອບການສອນ ທາງກາຍະພາບບຳບັດ.* ຈັງຫວັດຂ່ອນແກ່ນ: ມະຫາວິທະຍາໄລຂອນແກ່ນ.

ສະພາແຫ່ງຊາດ. (2015). *ກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ)* . ນະຄອນຫຼວງວຽງຈັນ: ສະພາແຫ່ງຊາດ.

ສຸວັນນີ ຍະຫະກອນ. (2555). *ຜົນການໃຊ້ໜັງສືເອເລັກໂທນິກເລື່ອງການອ່ານຄຳທີ່ມີວັນນະຍຸດ ທີ່ມີຕໍ່ສົມຜົນສຳເລັດທາງການຮຽນວິຊາພາສາໄທ ຂອງນັກຮຽນຊັ້ນປະຖົມສຶກສາປີທີ 1 ໂຮງຮຽນນິຄົມສ້າງຕົນເອງ ຈັ່ງຫວັດລະຍອງ 6.* ມະຫາວິທະຍາໄລສຸໂຂໄທ.

**P-ISSN**: 3078-5405; **E-ISSN**: 3080-2628

ສົມລວຍ ສຸດຕິຍະໄທ. (2011). *ການວັດ ແລະ ປະເມີນຜົນການສຶກສາ.* ຫຼວງພະບາງ: ວິທະຍາໄລຄູຫຼວງພະບາງ.

ຊະວະລິດ ຊູກຳແພງ (ອ້າງໃນ ຄຳພົງ ອິນທະວັນ 2019). (2553). *ການວິໄຈຫຼັກສູດ ແລະ ການສອນ.* ມາຫາສາລະຄາມ: ສຳນັກພິມ.

ບຸນຊົມ ສີສະອາດ. (2546). *ວິທີການທາງສະຖິຕິສຳລັບການວິໄຈ.* ກາລະສິນ: ປຣະສານການພິມ.

ບຸນຫຼາຍ ພັນທອງ, ເພັດສະໝອນ ສຸຂະວິໄຊ, ຈາຍພອນ ແສນບຸນເຊືອນ, ເພັດສັນຕິ ວັນນະພາ, & ສາຍຝົນ ຄູນສະຫວັດ. (2024). *ການພັດທະນາທັກສະການອ່ານຄຳສັບ ໂດຍນຳໃຊ້ມູມອ່ານ ຂັ້ນອະນຸບານ 2 ທີ່ໂຮງຮຽນອະນຸບານສາທິດຂອງວິທະຍາໄລຄູຫຼວງພະບາງ*. ນະຄອນຫຼວງພະບາງ: ວິທະຍາໄລຄູຫຼວງພະບາງ.

ຜະເຊີນ ກິດຈະການ ແລະ ສົມນຶກ ພັດທິຍະທະນີ. (2545). *(Effectiveness Index:E.I) ວາລະສານການວັດຜົນການສຶກສາ.* ມາຫາວິທະຍາໄລສາລະຄາມ.

ຜະເຊີນ ກິດຈະການ, & ສົມນຶກ ພັດທະຍະທະນີ. (2545). *ດັດສະນີປະສິດທິຜົນ (Effectiveness Index: E.I) ວາລະສານການວັດຜົນການສຶກສາ.* ມາຫາວິທະຍາໄລສາລະຄາມ.

ພິມລະພິນ ພົງປະເສີດ. (2563). *ວິທະຍານິພົນການພັດທະນາຄວາມສາມາດດ້ານການອ່ານ ແລະ ຂຽນ ຂອງເດັກຊັ້ນປໍ1 ສາຂາຫຼັກສູດ ແລະ ການສອນ.* ປະທຸມທານີ: ມະຫາວິທະຍາໄລສີລະປາກອນ.

ອ່ອນຈັນ ເພັດຈັນດາລາ ແລະ ແສງ ມະນີສຸພັນທະລົບ. (2022). *ການກຽມຄວາມພ້ອມດ້ານການອ່ານ.* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ.

ແສງມະນີ ສຸພັນທະລົບ. (2022). *ການກຽມຄວາມພ້ອມດ້ານການອ່ານ.* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ.

ໂນລາ ແອດມະແອແວ. (2560). *ການອອກແບບເຄື່ອງມືປະເມີນພັດທະນາການເດັກກ່ອນໄວຮຽນ.* ຈັງຫວັດຍະລາ: ສູນການສຶກສາເດັກກ່ອນໄວຮຽນຍະລາ.

Bruner (Pea, Roy D.). (1978). *The development of negation in early child language. ox.ac.uk (DPhil thesis).* England: University of Oxford. EThOS uk.bl.ethos.468493.

Global Campaign for Education . (2024). *Sustainable development plan: Goal 4. Viewed on 10th July 2024.* retrieved from https://shorturl.at/TXCZU .